ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

15 - 21 ພະຈິກ 2023
ປີທີ 12
ສະບັບທີ 946
ລາຍສັບປະດາ

## ສສຊ ສຸມໃສ່ປະກອບຄຳເຫັນໃສ່ 4 ຮ່າງກົດໝາຍ ປັບປຸງ ແລະ ສ້າງໃໝ່




(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 14 ພະຈິກ 2023 ຢູ່ຫໍສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ. ສະມາຊິກສະພາແຫ່ງຊາດແຕ່ລະເຂດເລືອກຕັ້ງໄດ້ຮັບຟັງ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ທີ່ສະເໜີໂດຍທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ ເຊິ່ງກົດໝາຍສະບັບນີ້ປະກອບມີ 10 ພາກ, 12 ໝວດ, 89 ມາດຕາ ໃນນີ້ໄດ້ມີການປັບປຸງ 67 ມາດຕາ, ສ້າງຂຶ້ນໃໝ່ 1ມາດ ຕາ; ຮັບຟັງ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ທີ່ສະເໜີໂດຍທ່ານ ຄຳແພງ ວິລະພັນ ປະທານກຳມະທິການຍຸຕິທຳ ສະພາແຫ່ງຊາດ ໂດຍທ່ານໃຫ້ຮູ້ເຖິງສະພາບລວມຂອງການຈັດຕັ້ງປະຕິບັດຮ່າງກົດໝາຍ, ເຫດຜົນຄວາມຈຳເປັນໃນການປັບປຸງ, ຂະບວນການປັບປຸງຮ່າງກົດໝາຍ, ໂຄງປະກອບ ລວມເຖິງ

ອ່ານຕໍ່ໜ້າ 4

## ຂ່າວໜ້າໃນ


ນິດສຳພາດປະທານສະພາປະຊາຊົນ... (ໜ້າ 5)


ສສຊ ສະເໜີຫຼາຍບັນຫາ... (ໜ້າ 6)



ກຳນົດໂຄຕາແຮງງານ... (ໜ້າ 8)

## ການປະເມີນຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ



(ສພຊ) ເພື່ອເສີມຂະຫຍາຍພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບໃນການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ ເຮັດໃຫ້ບຸກຄະລາກອນທີ່ຖືກປະເມີນເຫັນໄດ້ຈຸດດີຜົນງານ, ຈຸດອ່ອນຂໍ້ຄົງຄ້າງຂອງຕົນ ໃນໄລຍະຜ່ານມາ, ວິທີປັບປຸງແກ້ໄຂ ແລະ ຍົກສູງຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ວຽກງານສູງຂຶ້ນກວ່າເກົ່າ.

ໃນວັນທີ 13 ພະຈິກ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ດຳເນີນການປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມ

ອ່ານຕໍ່ໜ້າ 2

## ປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຮອງປະທານສະພາຄູຣານໃຫຍ່ມົງໂກລີ

(ສພຊ) ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ເມິງຄ໌ບາທາຣ໌ ລັກຄະວາ ຮອງປະທານສະພາຄູຣານໃຫຍ່ ແຫ່ງມົງໂກລີ ພ້ອມດ້ວຍຄະນະ ໃນວັນທີ 14 ພະຈິກ 2023 ທີ່ຫໍປະຊຸມສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ ໃນໂອກາດທີ່ຄະນະຜູ້ແທນດັ່ງກ່າວ ເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ໃນລະຫວ່າງວັນທີ 6-14 ພະຈິກ 2023.

ໂອກາດນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຕາງໜ້າໃຫ້ສະພາແຫ່ງຊາດ ແຫ່ງ



ສປປ ລາວ ສະແດງຄວາມຍິນດີຕ້ອນຮັບທ່ານ ເມິງຄ໌ບາທາຣ໌ ລັກຄະວາ ພ້ອມດ້ວຍຄະນະທີ່ມາຢ້ຽມຢາມເຮັດວຽກ ແລະ ເຂົ້າຮ່ວມການມອບ-ຮັບຜ້າພົມຂອງສະພາຄູຣານໃຫຍ່ມົງໂກລີ ໃຫ້ແກ່ສະພາແຫ່ງຊາດລາວ ໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ

ອ່ານຕໍ່ໜ້າ 4

## ຖະແຫຼງຜົນສຳເລັດການພິຈາລະນາວຽກງານຂອງລັດຖະບານ

(ສພຊ) ວັນທີ 10 ພະຈິກ 2023 ທ່ານສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຖະແຫຼງຂ່າວກ່ຽວກັບຜົນການພິຈາລະນາວຽກງານຂອງລັດຖະບານ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ກາງສະໄໝ 5 ປີ (2021-2025) ແລະ ແຜນທ້າຍສະໄໝ ຮອດປີ 2025,



ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ແຜນການປະຈຳປີ 2024 ແລະ ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 3 ປີຜ່ານມາ (2021-2023) ຕໍ່ບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ແລະ ພໍ່ແມ່ພີ່

ອ່ານຕໍ່ໜ້າ 2

## ສັງຄົມສ່ອງແສງ ບັນຫາຫຍຸ້ງຍາກກວ່າໝູ່ກ່ຽວກັບການລົງທຶນແມ່ນສິ່ງເອື້ອອຳນວຍຄວາມສະດວກ

(ສພຊ) ທ່ານ ພອນສານ ວິໄລເມັ້ງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ໄດ້ປະກອບຄຳເຫັນຕໍ່ແຜນການພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023-2024 ທີ່ລັດຖະບານສະເໜີໃນກອງປະຊຸມສະໄໝສາມັນເທື່ອທີ6ສະພາແຫ່ງຊາດ ຊຸດທີ IX ໃນວັນທີ 1



ພະຈິກ 2023 ໂດຍທ່ານເຫັນດີເປັນເອກະພາບກັບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາເງິນເຟີ້ ຫຼື ທາງດ້ານການເງິນ ເພາະເຫັນວ່າສະພາບການແກ້ໄຂບັນຫາເງິນເຟີ້ຕະຫຼອດໄລຍະ 1 ປີທີ່ຜ່ານມາ ພາຍຫຼັງທີ່ມີການປັບກົງຈັກຂອງລັດຖະບານ ເຫັນວ່າມີຄວາມ

ອ່ານຕໍ່ໜ້າ 8

ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!

## ການປະເມີນ...

(ຕໍ່ຈາກໜ້າ 1)

ພອນ ພົມວິຫານ ປະທານສະພາແຫ່ງຊາດ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ຄະນະຮັບຜິດຊອບການປະເມີນຄວາມໄວ້ວາງໃຈເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການສະເໜີຈຸດປະສົງການປະເມີນຈາກປະທານກອງປະຊຸມ, ຫຼັງຈາກນັ້ນ ໄດ້ຮັບຟັງລາຍງານການກະກຽມ ແລະ ດຳເນີນວຽກງານຮອບດ້ານ ກ່ຽວກັບການປະເມີນຄວາມໄວ້ວາງໃຈ, ປະກາດລະບຽບການປະເມີນ ແລະ ກຳນົດໜ່ວຍຄົ້ນຄວ້າບົດລາຍງານຂອງເປົ້າໝາຍທີ່ຖືກປະເມີນຄວາມໄວ້ວາງໃຈ ຈາກຫົວໜ້າຄະນະຮັບຜິດຊອບການປະເມີນ. ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ ແລະ ຮັບຮອງເອົາການແຕ່ງຕັ້ງຄະນະຕ່າງໆ; ຈາກນັ້ນ ສະມາຊິກສະພາແຫ່ງຊາດ ໄດ້ສືບຕໍ່ຄົ້ນຄວ້າຢູ່ໃນແຕ່ລະໜ່ວຍຄົ້ນຄວ້າຕໍ່ເປົ້າໝາຍທີ່ຖືກປະເມີນ ເຊິ່ງບຸກຄະລາກອນ ທີ່ຖືກປະເມີນຄວາມໄວ້ວາງໃຈ ມີທັງໝົດ 67 ທ່ານ ຍິງ 13 ທ່ານ, ໃນນີ້ ສຳນັກງານປະທານປະເທດມີ 2 ທ່ານ ຍິງ 1 ທ່ານ; ສະພາແຫ່ງຊາດ ມີ 32 ທ່ານ ຍິງ 6 ທ່ານ; ລັດຖະບານມີ 22 ທ່ານ ຍິງ 3 ທ່ານ; ອົງການກວດສອບແຫ່ງລັດມີ 1 ທ່ານ; ອົງການກວດກາແຫ່ງລັດມີ 1 ທ່ານ; ອົງການໄອຍະການປະຊາຊົນສູງສຸດມີ 1 ທ່ານ; ສານປະຊາຊົນສູງສຸດ ມີ 8 ທ່ານ ຍິງ 3 ທ່ານ. ໃນຕອນບ່າຍ ພາຍຫຼັງປະທານກອງປະຊຸມ ມີຄຳເຫັນຊີ້ນຳກ່ຽວກັບການປະເມີນ, ຄະນະຄວບຄຸມການປ່ອນບັດ ໄດ້ດຳເນີນການຕາມຂັ້ນຕອນຂອງການປ່ອນບັດ ແລະ ລາຍງານຈຳນວນບັດ. ຕອນທ້າຍກອງປະຊຸມ, ປະທານກອງປະຊຸມ ໄດ້ມີຄຳເຫັນສັງລວມກ່ຽວກັບການປະເມີນ ແລະ ມອບໃຫ້ຄະນະຮັບຜິດຊອບປະເມີນ ແລະ ກອງເລຂານຳເອົາຄະແນນໄປນັບ ແລ້ວນຳມາລາຍງານ ໃຫ້ກອງປະຊຸມສະພາແຫ່ງຊາດ ເພື່ອຮັບຊາບ.

## ຖະແຫຼງ...

(ຕໍ່ຈາກໜ້າ 1)

ນ້ອງຊາວລາວທີ່ຢູ່ຕ່າງປະເທດໃຫ້ໄດ້ຮັບຊາບຢ່າງທົ່ວເຖິງກັນ.

ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 31 ຕຸລາ 2023 ເຊິ່ງໃນວາລະທຳອິດກອງປະຊຸມໄດ້ຮັບຟັງການລາຍງານຂອງລັດຖະບານ ໂດຍທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ລາຍງານໂດຍສັງເຂບກ່ຽວກັບສະພາບການເຄື່ອນໄຫວວຽກງານພົ້ນເດັ່ນ ກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ຫຼັງຈາກນັ້ນ, ທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ກໍໄດ້ລາຍງານເພີ່ມເຕີມຕໍ່ກອງປະຊຸມ, ໃນວັນທີ 3 ພະຈິກຜ່ານມາ ກອງປະຊຸມຂອງພວກເຮົາຍັງໄດ້ຮັບຟັງການລາຍງານກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະເໜີໂດຍທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ໃນວັນທີ 6 ທີ່ຜ່ານມາ, ທ່ານນາຍົກລັດຖະມົນຕີ ໄດ້ມີຄວາມເຫັນຕໍ່ກອງປະຊຸມ ເພື່ອໃຫ້ຄວາມກະຈ່າງແຈ້ງຕໍ່ວຽກງານຂອງລັດຖະບານ ແລະ ທ່ານປະທານສະພາແຫ່ງຊາດ ກໍໄດ້ມີຄວາມເຫັນສະຫຼຸບຕໍ່ວາລະທີ 1.

ບັນດາເນື້ອໃນທີ່ກ່າວມານັ້ນ ລ້ວນແຕ່ເປັນບັນຫາຈຳເປັນສຳຄັນພື້ນຖານຂອງປະເທດຊາດ ເພື່ອແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ໃຫ້ນັບມື້ນັບເຂັ້ມແຂງ, ພາຍຫຼັງທີ່ໄດ້ຮັບຟັງການລາຍງານຂອງລັດຖະບານແລ້ວ ຂ້າພະເຈົ້າໄດ້ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ IX ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ກໍໄດ້ຊັກຖາມ ຕໍ່ລັດຖະບານດ້ວຍຄວາມຮັບຜິດຊອບສູງ ມີບັນຍາກາດຟົດຟື້ນ ພ້ອມທັງສະເໜີກົນໄກ, ວິທີການ ແລະ ມາດຕະການ ເພື່ອໃຫ້ລັດຖະບານນຳໄປຊີ້ນຳຂະແໜງການກ່ຽວຂ້ອງຂອງຕົນ ຄົ້ນຄວ້າປັບປຸງ ແລະ ຈັດຕັ້ງປະຕິບັດໃນຕໍ່ໜ້າໃຫ້ສອດຄ່ອງກັບສະພາບ ແລະ ເງື່ອນໄຂຄວາມເປັນຈິງ ຂອງປະເທດເຮົາ. ສະນັ້ນ, ຂ້າພະເຈົ້າ ຂໍສັງລວມບາງເນື້ອໃນພົ້ນເດັ່ນ ດັ່ງນີ້:

1. ວຽກງານແຜນພັດທະນາເສດຖະກິດ-ສັງຄົມ

ສະພາແຫ່ງຊາດໄດ້ສະເໜີໃຫ້ລັດຖະບານ ເອົາໃຈໃສ່ດັ່ງນີ້:

1) ຊຸກຍູ້ການຜະລິດກະສິກຳ ທີ່ເປັນທ່າແຮງຂອງປະເທດ ເພື່ອຫຼຸດຜ່ອນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ດ້ວຍການສະໜອງປັດໃຈການຜະລິດ ເປັນຕົ້ນເຕັກນິກວິຊາການ, ແນວພັນພືດ, ແນວພັນສັດ, ຝຸ່ນ ແລະ ອາຫານສັດ ທີ່ມີຄຸນນະພາບ. ພ້ອມກັນນັ້ນ, ກໍສະເໜີໃຫ້ມີມາດຕະການປົກປ້ອງການຜະລິດພາຍໃນ ດ້ວຍການອອກນິຕິກຳທີ່ກ່ຽວຂ້ອງ ເພື່ອກຳນົດຜະລິດຕະພັນໃດທີ່ພາຍໃນສາມາດຜະລິດໄດ້ ແມ່ນຫ້າມນຳເຂົ້າ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຜະລິດພາຍໃນປະເທດ ກໍຄືການຫຼຸດຜ່ອນການຫຼັ່ງໄຫຼຂອງເງິນຕາຕ່າງປະເທດ; ພ້ອມກັນນັ້ນ, ກໍຕ້ອງຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳດັ່ງກ່າວໃຫ້ເຂັ້ມງວດ ໂດຍສະເພາະການລັກລອບນຳເຂົ້າຜະລິດຕະພັນທີ່ບໍ່ຖືກກົດໝາຍ ຢູ່ດ່ານທ້ອງຖິ່ນ, ດ່ານປະເພນີ, ການຄ້າຊາຍແດນ ແລະ ອື່ນໆ.

2) ຊຸກຍູ້ສົ່ງເສີມການພັດທະນາແຫຼ່ງທ່ອງທ່ຽວດັ່ງກ່າວ ດ້ວຍການພັດທະນາໂຄງລ່າງພື້ນຖານ, ການເຂົ້າເຖິງແຫຼ່ງທຶນຂອງຜູ້ປະກອບທຸລະກິດການທ່ອງທ່ຽວ, ການສ້າງບຸກຄະລາກອນ ໃນຂົງເຂດວຽກງານທ່ອງທ່ຽວ ໃຫ້ຕອບສະໜອງກັບວຽກງານ, ຊຸກຍູ້ປະຊາຊົນບັນດາເຜົ່າ ໃນການຜະລິດສິນຄ້າທີ່ລະນຶກ ໂດຍສະເພາະແມ່ນໃນໄລຍະທີ່ປະເທດເຮົາເປີດປີທ່ອງທ່ຽວໃນປີ 2024.

3) ຊີ້ນຳກະຊວງທີ່ກ່ຽວຂ້ອງ ຮີບຮ້ອນຄົ້ນຄວ້າ ແລະ ຊອກວິທີການແກ້ໄຂບັນຫາດັ່ງກ່າວ ດ້ວຍການກຳນົດນະໂຍບາຍ ດ້ານການພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳທີ່ມີຄຸນນະພາບ ເພື່ອໃຫ້ລູກຫຼານມີວຽກເຮັດງານທຳ, ມີອາຊີບ, ມີລາຍໄດ້ ແລະ ມີຊີວິດການເປັນຢູ່ທີ່ດີຂຶ້ນ.

4) ຊີ້ນຳກະຊວງກ່ຽວຂ້ອງຄົ້ນຄວ້າວິທີການແກ້ໄຂບັນຫາດັ່ງກ່າວຕື່ມ ເພື່ອເຮັດໃຫ້ການດຳລົງຊີວິດຂອງພວກເພິ່ນດີຂຶ້ນຕື່ມ ໂດຍສະເພາະແມ່ນການປະຕິບັດນະໂຍບາຍຕໍ່ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດໃຫ້ມີຄວາມຄືບໜ້າຕື່ມອີກ.

5) ສຸມງົບປະມານ, ທຶນຮອນ ເຂົ້າໃສ່ການຊຳລະສະສາງໜີ້ສິນໂຄງການລົງທຶນຂອງລັດເປັນອັດຕາສ່ວນຫຼາຍ, ສ່ວນໂຄງການສືບຕໍ່ ສະເໜີໃຫ້ມີການປະເມີນປະສິດທິຜົນຢ່າງລະອຽດ ເພື່ອຫຼຸດຜ່ອນພາລະໜີ້ສິນລົງ, ສຳລັບໂຄງການສະເໜີໃໝ່ກໍໃຫ້ມີອັດຕາສ່ວນໜ້ອຍລົງ ເພື່ອສຸມໃສ່ແກ້ໄຂໜີ້ສິນໃນໄລຍະຜ່ານມາ ໃຫ້ຜ່ອນຄາຍລົງໂດຍໄວ. ເອົາໃຈໃສ່ຮີບຮ້ອນແຕ່ຫົວທີ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໃນເດືອນມັງກອນ 2024.

6) ຕໍ່ການຄຸ້ມຄອງແຮ່ທາດ: ໃຫ້ເພີ່ມທະວີການຄຸ້ມຄອງໃຫ້ເຂັ້ມງວດຕື່ມ ດ້ວຍການສ້າງແລະປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍແກ້ໄຂບັນຫາຕ່າງໆຢ່າງເຂັ້ມງວດ, ຮັດກຸມ. ພ້ອມກັນນັ້ນ, ສະເໜີໃຫ້ກວດກາປະເມີນຄືນໂຄງການລົງທຶນດ້ານແຮ່ທາດເຫຼັກທີ່ໄດ້ເຮັດທົດລອງໄລຍະ 3 ປີຢ່າງເຂັ້ມງວດ, ມີມາດຕະການຕໍ່ຜູ້ລະເມີດຢ່າງເດັດຂາດ ແລະ ຄວນກ້າວໄປເຖິງການຢຸດຕິໂຄງການທີ່ເປັນຜົນກະທົບຕໍ່ສະພາບແວດລ້ອມ, ທຳມະຊາດ ແລະ ຊີວິດຂອງປະຊາຊົນ ແລະ ຊີ້ນຳພາກສ່ວນກ່ຽວຂ້ອງແກ້ໄຂຢ່າງທັນການ ແລະ ຄວນມີການສະຫງວນແຮ່ທາດ ໃຫ້ແກ່ຄົນລຸ້ນຕໍ່ໄປ ແລະ ມີມາດຕະການປັບປຸງທຶນພັດທະນາສິ່ງແວດລ້ອມທຳມະຊາດ ໃຫ້ກັບຄືນສູ່ສະພາບເດີມ; ການຂຸດຄົ້ນເກືອກາລີ ທີ່ຕັ້ງຢູ່ໃກ້ຕົວເມືອງ ໂດຍສະເພາະໃນນະຄອນຫຼວງວຽງຈັນ ກໍໃຫ້ເພີ່ມທະວີການຕິດຕາມຢ່າງໃກ້ຊິດ ເພື່ອບໍ່ໃຫ້ມີຜົນກະທົບຕາມມາ; ການລົງທຶນດ້ານແຮ່ທາດ ໃຫ້ຕິດພັນກັບການປຸງແຕ່ງຕາມແຜນຍຸດທະສາດການຄຸ້ມຄອງແຮ່ທາດທີ່ລັດຖະບານໄດ້ສະເໜີໃຫ້ສະພາແຫ່ງຊາດ ຮັບຮອງເອົາແລ້ວນັ້ນ, ຫຼຸດຜ່ອນການສົ່ງອອກວັດຖຸດິບ; ການເກັບລາຍຮັບຈາກການເຮັດທົດລອງແຮ່ທາດ ຕ້ອງປະຕິບັດຕາມກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ, ບໍ່ປ່ອຍໃຫ້ລັດເສຍຜົນປະໂຫຍດຫຼາຍໂພດ.

7) ນອກຈາກນີ້, ສະມາຊິກສະພາແຫ່ງຊາດ ຈາກເຂດເລືອກຕັ້ງຕ່າງໆ ຍັງໄດ້ປະກອບຄຳເຫັນຕໍ່ບັນຫາການປັບປຸງບູລະນະພື້ນຖານໂຄງລ່າງ ໂດຍສະເພາະເສັ້ນທາງຫຼວງ, ຂົວ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄົມມະນາຄົມ ຂອງພໍ່ແມ່ປະຊາຊົນ, ຄວນມີການແບ່ງຄວາມຮັບຜິດຊອບໃຫ້ຂັ້ນທ້ອງຖິ່ນ ດູແລບົວລະບັດຮັກສາ ກໍເປັນວິທີການທີ່ດີ.

2. ວຽກງານແຜນງົບປະມານແຫ່ງລັດ

1) ສະມາຊິກສະພາແຫ່ງຊາດ ມີຄວາມເປັນຫ່ວງ ແລະ ມີການປະກອບຄຳເຫັນຫຼາຍ ແມ່ນການເກັບລາຍຮັບໃຫ້ໄດ້ຢ່າງຄົບຖ້ວນ ບໍ່ໃຫ້ຮົ່ວໄຫຼ. ວາງມາດຕະການລົງໂທດຕໍ່ຜູ້ກະທຳຜິດ ຢ່າງເດັດຂາດ ແລະ ເຂັ້ມງວດ; ຕິດຕາມຊຸກຍູ້ການຫັນເປັນທັນສະໄໝ ໃນການເກັບລາຍຮັບດ້ວຍລະບົບເອເລັກໂຕຣນິກໃຫ້ກວ້າງຂວາງ; ເພີ່ມທະວີຄວາມເອົາໃຈໃສ່ຕາມທິດປະຢັດມັດທະຍັດງົບປະມານ ເພື່ອທ້ອນໂຮມທຶນຮອນ, ງົບປະມານເຂົ້າໃນການແກ້ໄຂບັນຫາໜີ້ສິນໃນຕໍ່ໜ້າ, ທັງເປັນການເພີ່ມຈຳນວນຄັງສຳຮອງຂອງປະເທດໃຫ້ສູງຂຶ້ນ.

2) ໃຫ້ຄຸ້ມຄອງກອງທຶນປະເພດຕ່າງໆ ລວມສູນເຂົ້າງົບປະມານຕາມກົດໝາຍກຳນົດ ເພື່ອເຮັດໃຫ້ການຈັດສັນເງິນງົບປະມານປະຈຳປີບໍ່ໃຫ້ມີຄວາມຊັກຊ້າ, ຄົ້ນຄວ້າສ້າງເປັນນິຕິກຳໃຕ້ກົດໝາຍ ແກ້ໄຂບັນຫາຕ່າງໆໃຫ້ມີບ່ອນອີງໃນການຈັດຕັ້ງປະຕິບັດ.

3) ຮີບຮ້ອນເລັ່ງທວງເກັບກູ້ຄືນໜີ້ສິນຂອງລັດ ເພື່ອນຳເງິນດັ່ງກ່າວມາແກ້ໄຂບັນຫາຕ່າງໆ ໃນສະພາບເສດຖະກິດ-ການເງິນຂອງພາກລັດເຮົາພົບຄວາມຫຍຸ້ງຍາກຄືປັດຈຸບັນ ພ້ອມທັງເກັບກູ້ໜີ້ສິນທີ່ສານຕັດສິນມາເປັນຂອງລັດ, ຂອງກາງຄະດີ ໂດຍສະເພາະຄະດີກ່ຽວກັບຢາເສບຕິດ ເຊິ່ງມີຊັບສິນເປັນຈຳນວນຫຼາຍໃຫ້ສຳເລັດໂດຍໄວ ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໂດຍໄວ.

4) ຮີບຮ້ອນດຳເນີນການປະຕິຮູບລັດວິສາຫະກິດທີ່ເຄື່ອນໄຫວທຸລະກິດປະສິດທິຜົນບໍ່ສູງ, ເກີດບັນຫາໜີ້ສິນຄຸມເຄືອຂອງປະເທດຊາດ ເຊິ່ງຈະສ້າງບັນຫາຕ່າງໆໃຫ້ແກ່ລັດຖະບານ. ການປັບປຸງລັດວິສາຫະກິດດັ່ງກ່າວ ກໍເພື່ອຮັບປະກັນການເຄື່ອນໄຫວດຳເນີນທຸລະກິດ ມີປະສິດທິພາບ, ປະສິດທິຜົນ ແລະ ເປັນກຳລັງແຮງເປັນເຈົ້ານຳໜ້າພາທາງໃນການພັດທະນາເສດຖະກິດ ໃຫ້ແກ່ລັດຖະບານ.

3. ວຽກງານທະນາຄານ

1) ສະເໜີໃຫ້ລັດຖະບານ ເພີ່ມທະວີຄວາມເອົາໃຈໃສ່ຊີ້ນຳທະນາຄານ ແຫ່ງ ສປປ ລາວ ໃນການຄຸ້ມຄອງມະຫາພາກທາງດ້ານເງິນຕາ ແກ້ໄຂບັນຫາເງິນເຟີ້, ອັດຕາແລກປ່ຽນທີ່ຍັງຜັນຜວນ ທີ່ປະເທດເຮົາກຳລັງປະສົບຢູ່ ທີ່ສົ່ງຜົນກະທົບຕໍ່ການເໜັງຕີງຂອງລາຄາສິນຄ້າ ແລະ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນ. ສະນັ້ນ, ຫັນການຄຸ້ມຄອງວຽກງານການເງິນໄປສູ່ກົດໝາຍຢ່າງເຂັ້ມງວດ, ຊອກໃຫ້ເຫັນການລະເມີດກົດໝາຍໃນຂົງເຂດເງິນຕາ, ນຳເອົາຜູ້ລະເມີດມາລົງໂທດຕາມກົດໝາຍ ເພື່ອບໍ່ໃຫ້ສ້າງຄວາມເສຍຫາຍແກ່ເສດຖະກິດ-ການເງິນຂອງປະເທດເຮົາ.

2) ສືບຕໍ່ຄຸ້ມຄອງການສົ່ງອອກ ແລະ ນຳເຂົ້າສິນຄ້າໃຫ້ເຂັ້ມງວດຕື່ມ. ສິ່ງສຳຄັນແມ່ນການວາງມາດຕະການທາງກົດໝາຍ ເພື່ອຄວບຄຸມບັນຫາດັ່ງກ່າວ, ກຳນົດມາດຕະການລົງໂທດຜູ້ກະທຳຜິດຢ່າງເດັດຂາດ, ເຂັ້ມງວດ ແລະ ທັນການ.

4. ການຈັດຕັ້ງປະຕິບັດວາລະແຫ່ງຊາດ

1) ປົກປ້ອງຜະລິດຕະພັນ ທີ່ປະເທດເຮົາສາມາດຜະລິດໄດ້ ເພື່ອຊຸກຍູ້, ສົ່ງເສີມຜະລິດຕະພັນພາຍໃນ ຫຼຸດຜ່ອນການນຳເຂົ້າ ເຊິ່ງຈະກາຍເປັນການນຳເອົາເງິນຕາອອກຫຼາຍ; ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ຜູ້ຜະລິດສາມາດເຂົ້າເຖິງແຫຼ່ງທຶນ ທີ່ມີດອກເບ້ຍຕໍ່າ ເພື່ອເຮັດໃຫ້ຕົ້ນທຶນການຜະລິດຕໍ່າສາມາດແຂ່ງຂັນໄດ້.

2) ເພີ່ມທະວີດ້ານງົບປະມານເຂົ້າໃສ່ການສ້າງໂຄງລ່າງພື້ນຖານ ໃຫ້ແກ່ວຽກງານທ່ອງທ່ຽວ, ການພັດທະນາແຫຼ່ງທ່ອງທ່ຽວ, ການເຂົ້າເຖິງແຫຼ່ງທຶນຂອງຜູ້ປະກອບການທ່ອງທ່ຽວ, ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ແລະ ອື່ນໆ.

3) ເອົາໃຈໃສ່ການເກັບລາຍຮັບ ໃຫ້ໄດ້ຢ່າງຄົບຖ້ວນຕາມກົດໝາຍ, ບໍ່ປ່ອຍໃຫ້ຜູ້ປະກອບການຫຼົບຫຼີກການປະຕິບັດພັນທະເຂົ້າງົບປະມານແຫ່ງລັດ, ເກັບກູ້ຄືນໜີ້ຕ້ອງຮັບຂອງລັດຖະບານ ຈາກພາກທຸລະກິດ, ແກ້ໄຂຜົນການກວດສອບ ເພື່ອເກັບກູ້ເງິນຄຳ ແລະ ຊັບສິນຂອງລັດຄືນ;

4) ກອງປະຊຸມເຫັນດີສືບຕໍ່ປະຕິບັດວາລະແຫ່ງຊາດໄປອີກຈົນໝົດທ້າຍສະໄໝ ໃຫ້ລັດຖະບານມີການປະເມີນຄືນການຈັດຕັ້ງປະຕິບັດວາລະແຫ່ງຊາດຢ່າງທັນການ, ຈະແຈ້ງກວ່າເກົ່າ.

ກອງປະຊຸມຄັ້ງນີ້, ນອກຈາກໄດ້ຮັບຟັງການລາຍງານຂອງລັດຖະບານແລ້ວ, ບັນດາທ່ານລັດຖະມົນຕີ ຈາກກະຊວງກ່ຽວຂ້ອງ ໄດ້ຊີ້ແຈງ, ອະທິບາຍຕໍ່ຄຳຊັກຖາມແລະຕອບ-ຖາມກັບທີ່ ຕໍ່ສະມາຊິກສະພາແຫ່ງຊາດທີ່ໄດ້ຍົກຂຶ້ນໃນວາລະກອງປະຊຸມ.

ອີງຕາມວາລະກອງປະຊຸມ ໃນວັນທີ 21 ພະຈິກ 2023 ທີ່ຈະມາເຖິງ ຜູ້ແທນກອງປະຊຸມຈະໄດ້ລົງຄະແນນຮັບຮອງເອົາມະຕິແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ (2021-2025) ແລະ ແຜນທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ແລະ ມະຕິແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ກາງສະໄໝ 5 ປີ (2021-2025) ແລະ ແຜນທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ແຜນການປະຈຳປີ 2024.

# ນາຍົກລັດຖະມົນຕີ ລາຍງານສະພາບການເຄື່ອນໄຫວວຽກງານ ທີ່ພົ້ນເດັ່ນກາງສະໄໝ 5 ປີ ຄັ້ງທີ IX

ຕໍ່ຈາກສະບັບກ່ອນ...

3. ຂົງເຂດວັດທະນະທຳ-ສັງຄົມ

ໄດ້ຊີ້ນຳພາກສ່ວນກ່ຽວຂ້ອງປະຕິບັດຕາມດຳລັດ 348/ລບ ໂດຍສຸມໃສ່ປະຕິບັດ 9 ຕົວຊີ້ວັດ ໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນຜ່ານຈາກການປະຕິບັດຕົວຈິງເຫັນວ່າ: ມີ 5 ຕົວຊີ້ບອກມີຄວາມຄືບໜ້າດີຄື: ການສ້າງບ້ານພົ້ນທຸກ, ສ້າງບ້ານພັດທະນາ. ສ້າງບ້ານໃຫ່ຍຢູ່ຊົນນະບົດເປັນຕົວເມືອງ, ການຈັດສັນພູມລຳເນົາ ແລະ ການສ້າງເມືອງເຂັ້ມແຂງຮອບດ້ານ; ພ້ອມນັ້ນ, ກໍມີ 1 ຕົວຊີ້ບອກມີຄວາມຊັກຊ້າເຊັ່ນ: ການສ້າງເມືອງພົ້ນທຸກ ແລະ ສ້າງເມືອງເຂັ້ມແຂງຮອບດ້ານ ແລະ ມີ 3 ຕົວຊີ້ບອກອາດບໍ່ສາມາດບັນລຸໄດ້ຕາມຄາດໝາຍທີ່ວາງໄວ້ຄື: ການສ້າງໃຫ້ໄດ້ຄອບຄົວພົ້ນທຸກ, ສ້າງຄອບຄົວພັດທະນາ ແລະ ຂະຫຍາຍກອງທຶນພັດທະນາບ້ານ ເຊິ່ງຈະໄດ້ສືບຕໍ່ແກ້ໄຂໃນຕໍ່ໜ້າ. ສັງລວມແລ້ວມາຮອດປັດຈຸບັນທົ່ວປະເທດ ສາມາດພົ້ນທຸກແລ້ວ 976.644 ຄອບຄົວ, 5.438 ບ້ານ, 64 ເມືອງ; ສາມາດພັດທະນາໄດ້ 779.119 ຄອບຄົວ (79,77 ໃນຄອບຄົວພົ້ນທຸກ), 2.150 ບ້ານ, ບ້ານໃຫ່ຍກາຍເປັນຕົວເມືອງຢູ່ຊົນນະບົດ 25 ບ້ານ, ເມືອງເຂັ້ມແຂງຮອບດ້ານ 6 ເມືອງ ແລະ ແຂວງເປັນຫົດໜ່ວຍຍຸດທະສາດ ໄດ້ 2 ແຂວງ ແລະ ນະຄອນຫຼວງວຽງຈັນ.

- ໄດ້ສຸມໃສ່ການເຝົ້າລະວັງ ແລະ ປ້ອງກັນການແຜ່ລະບາດຂອງພະຍາດຕາມລະດູການແຕ່ຫົວທີ ເປັນຕົ້ນ ໄຂ້ຍຸງລາຍ ເຊິ່ງເຮັດໃຫ້ກໍລະນີການເສຍຊີດວິດຍ້ອນໄຂ້ຍຸງລາຍໃນປີນີ້ຫຼຸດລົງເທື່ອທຽບໃສ່ປີຜ່ານມາ; ໄດ້ເອົາໃຈໃສ່ປັບປຸງການບໍລິການປິ່ນປົວຢູ່ບັນດາໂຮງໝໍໃຫ້ມີຄຸນນະພາບດີກວ່າເກົ່າ ທັງໄດ້ເອົາໃຈໃສ່ການສະໜອງຢາໃຫ້ບັນດາໂຮງໝໍຢ່າງພຽງພໍ. ພ້ອມກັນນັ້ນ, ກໍໄດ້ເອົາໃຈໃສ່ແກ້ໄຂບັນຫາໜີ້ສິນກອງທຶນປະກັນສຸຂະພາບ ຢູ່ບັນດາໂຮງໝໍຕ່າງໆ ສາມາດເຮັດໃຫ້ໂຮງໝໍມີສະພາບຄ່ອງທາງດ້ານການເງິນ ເພື່ອໃຫ້ການບໍລິການປິ່ນປົວຄົນເຈັບ ໄດ້ຢ່າງປົກກະຕິ.

- ໄດ້ເອົາໃຈໃສ່ຕິດຕາມ



ແລະ ຊີ້ນຳຢ່າງໃກ້ຊິດ ໃນການຮຽນການສອນທຸກຂັ້ນ ໂດຍສະເພາະ 9 ຕົວຊີ້ບອກທີ່ມີຄວາມສ່ຽງທີ່ຈະບໍ່ບັນລຸ ເປັນຕົ້ນແມ່ນອັດຕາເຂົ້າຮຽນຂອງເດັກ 5 ປີ, ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ, ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1, ອັດຕາປະລະການຮຽນຂອງນັກຮຽນຊັ້ນ ມັດທະຍົມຕອນຕົ້ນ. ພ້ອມກັນນັ້ນ ກໍໄດ້ສຸມໃສ່ແກ້ໄຂບັນຫາຄູອາສາສະໝັກ ແລະ ການຂາດແຄນຄູສອນໃນເຂດຊົນນະບົດ ໂດຍໄດ້ອອກ 5 ນະໂຍບາຍຕົ້ນຕໍ ເຊັ່ນ: ເຫັນດີຕໍ່ອາຍຸຄູທີ່ຮອດອາຍຸບຳນານແລ້ວ ໂດຍໄດ້ນະໂຍບາຍຄືເກົ່າ; ເຫັນດີໃຫ້ຜູ້ທີ່ເຄີຍເປັນຄູ ເມື່ອອອກຮັບເບ້ຍບຳນານແລ້ວສາມາດສືບຕໍ່ເປັນຄູສອນໄດ້ ໂດຍໄດ້ນະໂຍບາຍຕາມຕຳແໜ່ງສຸດທ້າຍໃນເວລາພັກບຳນານ; ປະຕິບັດເງິນໂມງສອນໃຫ້ຄູອາສາສະໝັກຄືກັນກັບຄູທີ່ເປັນລັດຖະກອນແລ້ວ ແລະ ອື່ນໆ (ລາຍລະອຽດໃຫ້ເບິ່ງໃນມະຕິ 09/ລບ, ລົງວັນທີ 17 ກໍລະກົດ 2023).

- ໄດ້ພະຍາຍາມແກ້ໄຂບັນຫາແຮງງານທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ແລະ ແຮງງານລາວທີ່ກັບມາຈາກປະເທດໃກ້ຄຽງ ໃຫ້ມີຄວາມສະຫງົບເປັນພື້ນຖານ. ພ້ອມກັນນັ້ນ ກໍໄດ້ເອົາໃຈໃສ່ຂຶ້ນທະບຽນແຮງງານຢູ່ຫົວໜ່ວຍການຜະລິດຕ່າງໆ ລວມທັງຢູ່ເຂດເສດຖະກິດພິເສດ ແລະ ສ້າງສີມືແຮງງານທີ່ມີຄຸນນະພາບ ເພື່ອສົ່ງອອກແຮງງານໃຫ້ບາງປະເທດ ທີ່ມີຄວາມຕ້ອງການ ແລະ ເໝາະສົມກັບສີມືຂອງແຮງງານລາວ ໄດ້ເອົາໃຈໃສ່ຝຶກ ແລະພັດທະນາສີມືແຮງງານ ຕາມສາຂາວິຊາຊີບຕ່າງໆ ແຕ່ສິ່ງທ້າທາຍ ກໍຍັງແມ່ນແຮງງານໄດ້ຫຼັ່ງໄຫຼໄປເຮັດວຽກຕ່າງປະເທດ. ພ້ອມກັນນັ້ນ, ກໍໄດ້ສຸມໃສ່ຄົ້ນຄົ້ນຄວ້າມາດຕະການແກ້ໄຂການຂາດແຄນແຮງງານຢູ່ພາຍໃນ ເນື່ອງຈາກສະພາບເງິນກີບອ່ອນຄ່າ ໂດຍໄດ້ປັບຄ່າແຮງ ຂັ້ນຕ່ຳຈາກ 1.300.000 ກີບ/ຄົນ/ເດືອນ ຂຶ້ນເປັນ 1.600.000 ກີບ/ຄົນ/ເດືອນ. ນອກນັ້ນກໍໄດ້ເອົາໃຈໃສ່ໃນການສະໜອງເຄື່ອງຂອງທີ່ຈຳເປັນໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດທີ່ເກີດຂຶ້ນ ແຕ່ລະປີ ແລະ ການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານຕໍ່ການປະຕິວັດໃນໄລຍະທີ່ຜ່ານມາ.

- ວຽກງານຖະແຫຼງຂ່າວ ວັດທະນະທຳ, ວັດທະນະທຳ ແລະ ທ່ອງທ່ຽວ ໃນເງື່ອນໄຂທີ່ສະພາບແວດລ້ອມພາຍນອກ, ພາຍໃນປະເທດ ມີຄວາມຫຍຸ້ງຍາກດ້ອຍດ້ານຕ່າງໆ ລັດຖະບານໄດ້ສຸມໃສ່ປັບປຸງວຽກງານຂົງເຂດນີ້ ດ້ວຍຄວາມພະຍາຍາມ, ສຳຄັນແມ່ນໄດ້ພະຍາຍາມຫັນເຄື່ອງມືວຽກງານຖະແຫຼງຂ່າວ, ການອອກຂ່າວເປັນທັນສະໄໝດ້ວຍຮູບແບບແລະວິທີການຕ່າງໆ ທີ່ມີຄຸນນະພາບສູງຂຶ້ນ ແລະ ທ່ວງທັນເຫດການຂຶ້ນກວ່າເກົ່າ ກາຍເປັນກະບອກສຽງທີ່ສຳຄັນໃຫ້ແກ່ພັກ ແລະ ລັດຖະບານຕີຖອຍບັນດາສື່ສັງຄົມ ທີ່ອອກຂ່າວຍຶດເບືອນຄວາມຈິງ, ສ້າງຄວາມແຕກແຍກໃນສັງຄົມ. ນອກຈາກນັ້ນ, ລັດຖະບານຍັງໄດ້ໃຫ້ຄວາມສຳຄັນໃນການປັບປຸງພື້ນຖານໂຄງລ່າງ ແລະ ຍົກສູງຄຸນນະພາບຂອງການບໍລິການທ່ອງທ່ຽວໃຫ້ດີຂຶ້ນ ເພື່ອກຽມຄວາມພ້ອມໃນປີທ່ອງທ່ຽວລາວ 2024.

4. ຂົງເຂດວຽກງານການປົກຄອງ, ການບໍລິຫານລັດ ແລະ ຍຸຕິທຳ

- ໄດ້ສະເໜີຜ່ານຮ່າງກົດໝາຍ ເພື່ອພິຈາລະນາຮັບຮອງ 46 ສະບັບ ໃນນັ້ນ, ມີກົດໝາຍສ້າງໃໝ່ 15 ສະບັບ ແລະ ກົດໝາຍປັບປຸງ 31 ສະບັບ; ໄດ້ຄົ້ນຄ້ວາປະກອບຄຳເຫັນໃສ່ຮ່າງລັດຖະບັນຍັດ, ຮ່າງດຳລັດ ແລະ ນິຕິກຳອື່ນໆ ຈຳນວນ 70 ສະບັບ, ໃນນີ້ ດຳລັດທີ່ຕິດພັນກັບ 2 ວາລະແຫ່ງຊາດ 22 ສະບັບ. ພ້ອມດຽວກັນນີ້, ລັດຖະບານ ຍັງໄດ້ຄົ້ນຄ້ວາຍຸດທະສາດການພັດທະນາໃນຫຼາຍຂົງເຂດ ແລະ ນຳສະເໜີສະພາແຫ່ງຊາດຮັບຮອງ;

- ໄດ້ເອົາໃຈໃສ່ປັບປຸງວຽກງານການຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຈຳນວນ

ອ່ານຕໍ່ສະບັບໜ້າ

# ການຈັດຕັ້ງປະຕິບັດແຜນເງິນຕາ ໃນໄລຍະກາງສະໄໝ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ

ຕໍ່ຈາກສະບັບກ່ອນ...

ປ່ຽນເງິນຕາຕົວແທນຂອງຕົນທັງໝົດ 113 ຮ້ານ. ພາຍຫຼັງຢຸດຕິການດຳເນີນທຸລະກິດຮ້ານແລກປ່ຽນເງິນຕາຕົວແທນທັງໝົດ, ກໍໄດ້ອອກຂໍ້ຕົກລົງຄຸ້ມຄອງການແລກປ່ຽນເງິນຕາ, ສະບັບເລກທີ 553/ທຫລ, ລົງວັນທີ 19 ມິຖຸນາ 2023 ແລະ ໄດ້ຊຸກຍູ້ບັນດາທະນາຄານທຸລະກິດຂະຫຍາຍການບໍລິການແລກປ່ຽນເງິນຕາ ດ້ວຍຫຼາຍຮູບແບບ ທັງໜ່ວຍບໍລິການແລກປ່ຽນ, ຕູ້ແລກປ່ຽນເງິນຕາຕ່າງປະເທດ ແລະ ຕູ້ກົດເງິນສົດເງິນຕາຕ່າງປະເທດອັດຕະໂນມັດ ຕາມຈຸດຍຸດທະສາດຕ່າງໆ; ລວມທັງອອກລະບຽບການເປີດໃຫ້ທະນາຄານທຸລະກິດນຳໃຊ້ເຄື່ອງມືທັນສະໄໝ ເພື່ອອຳນວຍຄວາມສະດວກໃຫ້ປະຊາຊົນສາມາດສະເໜີແລກປ່ຽນເງິນຕາຜ່ານເຄື່ອງມືດັ່ງກ່າວ.

2) ການຄຸ້ມຄອງເງິນຕາຕ່າງປະເທດ.

ຄຽງຄູ່ກັບການຈັດຕັ້ງປະຕິບັດນະໂຍບາຍເງິນຕາ, ອັດຕາແລກປ່ຽນ. ໃນໄລຍະກາງສະໄໝຕົ້ນ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ທຫລ ໄດ້ເລັງເຫັນບັນຫາຄວາມບໍ່ສົມດູນຂອງສະພາບເສດຖະກິດມະຫາພາກໂດຍສະເພາະແມ່ນການຂາດດຸນການຊຳລະກັບຕ່າງປະເທດ (ລາຍຮັບຈາກການສົ່ງອອກບໍ່ໄດ້ນຳກັບມາ ສປປ ລາວ ຫຼາຍເທົ່າທີ່ຄວນ), ບັນຫາໜີ້ສິນຕໍ່ຕ່າງປະເທດສະສົມ ແຕ່ຄັງສຳຮອງຢູ່ໃນລະດັບຕ່ຳ ເປັນແຮງກົດດັນໃຫ້ອັດຕາແລກປ່ຽນຜັນຜວນ, ມີປະກົດການປັ່ນປ່ວນອັດຕາແລກປ່ຽນຢູ່ພາຍໃນ ທຫລ ໄດ້ມີມາດຕະການດັ່ງນີ້:

- ໄດ້ສຳເລັດການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ ອອກເປັນນິຕິກຳໃຕ້ກົດໝາຍ ຈຳນວນ 23 ສະບັບ ໄດ້ຖືກຮັບຮອງແລ້ວ 8 ສະບັບ ອັນພົ້ນເດັ່ນແມ່ນຄຳສັ່ງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ ທີ່ກຳນົດເອົາການມີສ່ວນຮ່ວມຂອງທຸກຂະແໜງການໃນການຄຸ້ມຄອງເງິນຕາຕ່າງປະເທດ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ສະບັບເລກທີ 677/ທຫລ, ລົງວັນທີ 24 ກໍລະກົດ 2023; ແລະ



ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຢູ່ເຂດເສດຖະກິດພິເສດ ສະບັບເລກທີ 1039/ທຫລ, ລົງວັນທີ 25 ຕຸລາ 2023;

- ໄດ້ສຳເລັດການສ້າງຕັ້ງກົມຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບ, ການຄຸ້ມຄອງກະແສເງິນເຂົ້າ-ອອກປະເທດຈາກການຄ້າ, ການບໍລິການ, ການລົງທຶນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ພ້ອມນັ້ນ, ກໍ່ໄດ້ສ້າງຕັ້ງຫ້ອງການຕົວແທນ ທຫລ ປະຈຳເຂດເສດຖະກິດພິເສດບໍ່ເຕ່ນ ແລະ ສາມຫຼ່ຽມຄຳ ເພື່ອປະຕິບັດພາລະບົດບາດໃນການຄຸ້ມຄອງເງິນຕາຕ່າງປະເທດຢູ່ສອງເຂດດັ່ງກ່າວ;

- ໄດ້ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຢ່າງມີຍຸດທະສາດ ແລະ ແບບແຜນຫຼາຍຂຶ້ນກວ່າເກົ່າ ໂດຍໄດ້ປັບປຸງໂຄງສ້າງຄັງສຳຮອງເງິນຕາຕ່າງປະເທດໃຫ້ຫຼາຍສະກຸນເງິນ ແລະ ເພີ່ມອິງປະກອບຄຳ ເພື່ອຮອງຮັບກັບຄວາມຜັນຜວນຂອງຕະຫຼາດການເງິນໃນສາກົນ ແລະ ສອດຄ່ອງກັບໂຄງສ້າງການຄ້າຕ່າງປະເທດ ແລະ ການລົງທຶນຂອງ ສປປ ລາວ;ໄດ້ມີມາດຕະການໃນການບຸກຫຼາຍຂຶ້ນກັບຫົວໜ່ວຍຜູ້ປະກອບການປະເພດຕ່າງໆ ໂດຍສະເພາະຜູ້ນຳເຂົ້າ-ສົ່ງອອກ ແລະ ການລົງທຶນໂດຍກົງຈາກຕ່າງປະເທດທັງໝົດ 50 ເທື່ອບໍລິສັດຈາກເປົ້າໝາຍ 100 ບໍລິສັດ ດ້ວຍການລົງເກັບກຳຂໍ້ມູນ ແລະ ເຮັດວຽກຕົວຈິງ ເພື່ອຊຸກຍູ້ໃຫ້ນຳລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກ ເຂົ້າມາ ສປປ ລາວໃຫ້ຫຼາຍຂຶ້ນກວ່າໄລຍະຜ່ານມາ; ຊຸກຍູ້ຜູ້ນຳເຂົ້າ-ສົ່ງອອກ ໃຫ້ນຳລາຍຮັບກັບເຂົ້າປະເທດ ແລະ ເຮັດວຽກກັບກະຊວງອຸດສາຫະກຳການຄ້າ ເພື່ອລົງທະບຽນການຄ້າ, ອອກໃບຢັ້ງຢືນແຈ້ງການລົງທະບຽນຜູ້ນຳເຂົ້າ-ສົ່ງອອກ ເພື່ອເປີດບັນຊີເງິນຝາກສະເພາະຈຳນວນ 210 ບໍລິສັດ (ບໍລິສັດນຳເຂົ້າ 77 ບໍລິສັດ, ສົ່ງອອກ 19 ບໍລິສັດ ແລະ ບໍລິສັດນຳເຂົ້າ-ສົ່ງອອກ 144 ບໍລິສັດ), ມີບໍລິສັດເປີດບັນຊີເງິນຝາກນຳເຂົ້າ-ສົ່ງອອກນຳ ທທກ ແລ້ວ ຈຳນວນ 40 ບໍລິສັດ;

- ພັດທະນາລະບົບຄຸ້ມຄອງກະແສເງິນເຂົ້າ-ອອກປະເທດຈາກຂະແໜງການຄ້າ ແລະ ການລົງທຶນ ໂດຍໃຫ້ສາມາດເຊື່ອມໂຍງຮ່ວມກັນລະຫວ່າງຂະແໜງການ (ລະບົບຕິດຕາມກະແສເງິນຂອງ ທຫລ, ລະບົບຕິດຕາມການສົ່ງອອກ-ນຳເຂົ້າຂອງກະຊວງການເງິນ ແລະ ລະບົບຂໍ້ມູນຜູ້ລົງທະບຽນນຳເຂົ້າ-ສົ່ງອອກ) ແລະ ສາມາດທົດລອງນຳໃຊ້ໄດ້ໄຕມາດ 4/2023;

- ໄດ້ສົ່ງເສີມການນຳໃຊ້ເງິນກີບ ແລະ ຊຸກຍູ້ການນຳໃຊ້ເງິນຕາຕ່າງປະເທດໃຫ້ຜ່ານລະບົບທະນາຄານ ໂດຍຜ່ານມາໄດ້ຄົ້ນຄວ້າໃຫ້ບາງເປົ້າໝາຍທີ່ຂໍອະນຸຍາດນຳໃຊ້ເງິນຕາ ໂດຍສະເພາະຫົວໜ່ວຍທີ່ມີລາຍຮັບເປັນເງິນຕາຈາກການສົ່ງອອກ ພ້ອມທັງສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນ (ກີບ-ດົງ, ກີບ-ຢວນ, ກີບ-ບາດ ແລະ ກີບ-ຣຽວ) ເຂົ້າໃນການຊຳລະທາງດ້ານການຄ້າ ແລະ ການລົງທຶນ;ໄດ້ຈັດຕັ້ງຈັດກອງປະຊຸມເຜີຍແຜ່ນິຕິກຳວຽກງານຄຸ້ມຄອງເງິນຕາຕ່າງປະເທດ 13 ຄັ້ງ ຢູ່ສູນກາງ ແລະ ທ້ອງຖິ່ນ (ສະເພາະຢູ່ເຂດເສດຖະກິດ ພິເສດ 2 ຄັ້ງ).

1) ການຮັກສາສະຖຽນລະພາບທາງດ້ານການເງິນ.

ທຫລ ໄດ້ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ (ທທກ) ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕາມລະບຽບວ່າດ້ວຍຄວາມໝັ້ນຄົງທີ່ໄດ້ວາງອອກ, ໂດຍການລົງກວດກາກັບທີ່, ກວດກາຕາມເອກະສານລາຍງານຢ່າງເຂັ້ມງວດ ໄປຄຽງຄູ່ກັບການຄຸ້ມຄອງຕາມລະບຽບການ ເຊິ່ງໄດ້ເຮັດໃຫ້ວຽກງານຄຸ້ມຄອງຄວາມໝັ້ນຄົງຂອງສະຖາບັນການເງິນ ມີຄວາມຮັບປະກັນ

ອ່ານຕໍ່ສະບັບໜ້າ

# ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດປ້ອງກັນຊາດ

ຕໍ່ຈາກສະບັບກ່ອນ...

- ການຮັບປະກັນການເຄື່ອນໄຫວຂອງກຳລັງປະກອບອາວຸດ: ເຫັນວ່າ ຂອດການຈັດຕັ້ງປະຕິບັດຍັງບໍ່ສາມາດຕອບສະໜອງໄດ້ເທົ່າທີ່ຄວນ ໂດຍສະເພາະແມ່ນການປະກອບອາວຸດຍຸດໂທປະກອນ ແລະ ພາຫະນະເຕັກນິກ ທີ່ທັນສະໄໝ;
- ການສຶກສາອົບຮົມວຽກງານປ້ອງກັນຊາດ: ເຫັນວ່າ ການຈັດຕັ້ງປະຕິບັດໃນໄລຍະຜ່ານມາຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ ຍ້ອນວ່າກົນໄກການປະສານສົມທົບລະຫວ່າງພາກສ່ວນທີ່ກ່ຽວຂ້ອງຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ການລົງໂຄສະນາເຜີຍແຜ່ວຽກງານດັ່ງກ່າວ ແມ່ນເຄື່ອນໄຫວບໍ່ທັນກ້ວາງຂວາງ, ເລິກເຊິ່ງ, ຍັງບໍ່ທັນລົງສູ່ຮາກຖານປະຊາຊົນ, ກົນໄກໃນການຈັດຕັ້ງປະຕິບັດການສຶກສາອົບຮົມວຽກງານປ້ອງກັນຊາດຍັງບໍ່ດີເທົ່າທີ່ຄວນ, ພາກສ່ວນຮັບຜິດຊອບຍັງຖືເບົາຕໍ່ການສຶກສາອົບຮົບວຽກງານປ້ອງກັນຊາດ ໃຫ້ແກ່ນັກຮຽນ-ນັກສຶກສາ ແລະ ການສ້າງສະຕິປ້ອງກັນຊາດທົ່ວປວງຊົນຍັງບໍ່ທັນແຂງແຮງເທົ່າທີ່ຄວນ;
- ການຈັດຕັ້ງປະຕິບັດ



ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຂໍ້ຫ້າມສຳລັບກຳລັງປະກອບອາວຸດປະຊາຊົນ ເຫັນວ່າຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ.

**1.5. ບັນຫາທີ່ເກີດຂຶ້ນໃໝ່**

-ດ້ານໂຄງສ້າງຂອງຮ່າງກົດໝາຍສະບັບນີ້ ຍັງເຫັນວ່າບໍ່ທັນຄົບຖ້ວນ ຕາມກົດໝາຍວ່າດ້ວຍ ການສ້າງນິຕິກຳ (ສະບັບປັບປຸງ) ເປັນຕົ້ນ: ກົດໝາຍສະບັບນີ້ ເນື້ອໃນແມ່ນເວົ້າເຖິງວຽກງານ ແຕ່ການກຳນົດພາກທີ VIII ພັດກຳນົດກ່ຽວກັບວັນສ້າງຕັ້ງຂອງອົງການຈັດຕັ້ງ ຖ້າກຳນົດໃສ່ກົດໝາຍອື່ນອາດຈະເໝາະສົມກວ່າ.

- ຄວນກຳນົດເພີ່ມໝວດໜຶ່ງທີ່ເວົ້າເຖິງເຂດຍຸດທະສາດປ້ອງກັນຊາດ ຕື່ມອີກ.

**2. ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ**

2.1. ຄວາມເປັນມາຂອງກົດໝາຍ

ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ສະບັບທຳອິດ ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ V ສະບັບເລກທີ 07/ສພຊ, ລົງວັນທີ 22 ຕຸລາ 2004 ຊຶ່ງປະກອບມີ 7 ໝວດ, 33 ມາດຕາ. ຕໍ່ມາໄດ້ຮັບການປັບປຸງ 1 ຄັ້ງ ໃນປີ 2018 ແລະ ນຳໃຊ້ຈົນເຖິງປັດຈຸບັນ.

**2.2. ການໂຄສະນາເຜີຍແຜ່ກົດໝາຍ**

ພາຍຫຼັງທີ່ກົດໝາຍໄດ້ຖືກຮັບຮອງ ແລະ ປະກາດໃຊ້ ໃນປີ 2018, ກະຊວງປ້ອງກັນປະເທດ ໄດ້ຈັດພິມ ແລະ ແຈກຢາຍປຶ້ມກົດໝາຍ ຈຳນວນ 10.000 ຫົວ ໃຫ້ແຕ່ລະກົມກອງ. ພ້ອມທັງໄດ້ເອົາໃຈໃສ່ຈັດຕັ້ງການໂຄສະນາເຜີຍແຜ່ດ້ວຍຫຼາຍຮູບແບບ ເຊັ່ນ: ໂຄສະນາເຜີຍແຜ່ທາງໜັງສືພິມກອງທັບ, ວາລະສານປ້ອງກັນຊາດ, ເວັບໄຊ ແລະ ສື່ອອນລາຍຕ່າງໆຂອງກອງທັບ ແລະ ໄດ້ລົງເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍ ໃຫ້ນາຍທະຫານຢູ່ກົມກອງກຳລັງຫຼວງ-ກຳລັງທ້ອງຖິ່ນ ໃນທົ່ວກອງທັບ.

ອ່ານຕໍ່ສະບັບໜ້າ

# ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ຕໍ່ຈາກສະບັບກ່ອນ...

- ຄະນະພັກ-ຄະນະບັນຊາ ກະຊວງປ້ອງກັນຄວາມສະຫງົບ, ບັນດາກົມກອງອ້ອມຂ້າງກະຊວງ ແລະ ກອງບັນ ຊາການ ປກສ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ, ບັນຊາ ຄຸ້ມຄອງ ຕິດຕາມ, ກວດກາ ແລະ ຫັນທຸກການເຄື່ອນໄຫວຂອງວຽກງານວິຊາສະເພາະຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນເຂົ້າສູ່ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;
- ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວໜ້າທີ່ວຽກງານວິຊາສະເພາະຂອງກຳລັງປ້ອງກັນຄວາມສະຫງົບ ໃນການຮັບປະກັນການປົກປັກຮັກສາຄວາມສະຫງົບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍທາງດ້ານເສດຖະກິດ ແລະ ສັງຄົມ;
- ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໄດ້ຮັບການເຄົາລົບຈັດຕັ້ງປະຕິບັດຄຸ້ມຄອງ, ຕິດຕາມກວດກາ ຕາມກົດໝາຍຢ່າງເປັນລະບົບ, ຄ່ອງຕົວ, ມີປະສິດທິພາບ, ປະສິດທິຜົນ ໃນຂອບ



ເຂດທົ່ວກຳລັງປ້ອງກັນຄວາມສະຫງົບປະຊາຊົນ ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ແລະ ສອດຄ່ອງກັບພັນທະສາກົນ;
- ຍ້ອນນາຍ ແລະ ພົນຕຳຫຼວດ ທີ່ເຂົ້າຮ່ວມຮັບຟັງການໂຄສະນາເຜີຍແຜ່, ເຊື່ອມຊຶມກຳແໜ້ນກົດໝາຍດັ່ງກ່າວ ສ່ວນຫຼາຍມີຄວາມຮັບຮູ້, ເຂົ້າໃຈຕໍ່ກັບຂໍ້ກຳນົດ, ກົດລະບຽບ ແລະ ຂໍ້ຫ້າມຕ່າງໆຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;
- ຍ້ອນພະນັກງານ, ການຈັດຕັ້ງທຸກຂະແໜງການທີ່ກ່ຽວຂ້ອງ ຕະຫຼອດຮອດພໍ່ແມ່ປະຊາຊົນແມ່ນໃຫ້ການຮ່ວມມືເປັນຢ່າງດີ.

**2. ຂໍ້ຫຍຸ້ງຍາກ, ດ້ານອ່ອນ ແລະ ສາເຫດທີ່ພາໃຫ້ມີດ້ານອ່ອນ**

- ການໂຄສະນາ, ເຜີຍແຜ່ກົດໝາຍ ແລະ ການຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍ, ການຍົກລະດັບຄວາມຮັບຮູ້ທາງດ້ານກົດໝາຍ ໃຫ້ນາຍ ແລະ ພົນຕຳຫຼວດ ຍັງມີລັກສະນະຈຳກັດ ຍັງບໍ່ທັນກວ້າງຂວາງ ແລະທົ່ວເຖິງເຊິ່ງສະແດງອອກຄື: ຍັງບໍ່ທັນໄດ້ລົງໂຄສະນາໂດຍກົງຢູ່ຂັ້ນກອງບັນຊາການ ປກສ ເມືອງ, ນະຄອນ ແລະ ອີງໃສ່ການປະເມີນຜົນ ແລະ ປະສານສົມທົບຢູ່ທ້ອງຖິ່ນຈຳນວນໜຶ່ງ ຄວາມຮັບຮູ້ຕໍ່ກົດໝາຍ ກໍຄືພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳລັງປ້ອງກັນຄວາມສະຫງົບ ຍັງຈຳກັດ;
- ການສ້າງນິຕິກຳໃຕ້ກົດໝາຍ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ປະສານສົມທົບ ເຫັນວ່າມີຫຼາຍສະບັບ, ແຕ່ຂອດການຈັດຕັ້ງປະຕິບັດຕົວຈິງ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ;
- ນາຍ ແລະ ພົນຕຳຫຼວດ ຈຳນວນໜຶ່ງ ຍັງບໍ່ທັນກຳແໜ້ນເນື້ອໃນຂອງກົດໝາຍ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ອັນເຮັດໃຫ້ເກີດມີປະກົດການຫຍໍ້ທໍ້ໃນກຳລັງ ແລະ ເປັນຫາງສຽງຂອງສັງຄົມ;

ອ່ານຕໍ່ສະບັບໜ້າ

## ປະທານສະພາ...

(ຕໍ່ຈາກໜ້າ 1)

ແລະ ການຮ່ວມມືທີ່ດີ ລະຫວ່າງ ສປປ ລາວ ແລະ ມົງໂກລີ ກໍຄື ລະຫວ່າງ ສອງອົງການນິຕິບັນຍັດ ໃຫ້ໄດ້ຮັບການເສີມຂະຫຍາຍແໜ້ນແຟ້ນຍິ່ງໆຂຶ້ນ. ພ້ອມນີ້, ກໍໄດ້ກ່າວຊົມເຊີຍຕໍ່ການພົບປະ ລະຫວ່າງ ຮອງປະທານສະພາແຫ່ງຊາດລາວແລະ ຮອງປະທານສະພາຄູຣານໃຫຍ່ມົງໂກລີ ທີ່ໄດ້ຮັບໝາກຜົນສຳເລັດຢ່າງຈົບງາມ ໄດ້ມີການປຶກສາຫາລື ແລະ ແລກປ່ຽນຄຳເຫັນນຳກັນຫຼາຍບັນຫາ ໂດຍສະເພາະແມ່ນການຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືສອງຝ່າຍທີ່ດີຢູ່ແລ້ວນັ້ນ ໃຫ້ໄດ້ຮັບການເພີ່ມພູນຄູນສ້າງຂຶ້ນໄປເລື້ອຍໆ. ພ້ອມກັນນີ້, ສອງຝ່າຍໄດ້ສຳເລັດການມອບ-ຮັບຜ້າພົມຢ່າງເປັນທາງການ ເຊິ່ງເປັນຂອງຂວັນທີ່ມີຄວາມໝາຍອັນສຳຄັນຂອງສະພາຄູຣານໃຫຍ່ມົງໂກລີ ໃຫ້ແກ່ສະພາແຫ່ງຊາດລາວ.

ທ່ານ ປະທານສະພາແຫ່ງຊາດລາວ ຍັງໄດ້ຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນໄປຍັງພະນະທ່ານ ຊັງຕັງຊາຫາຣ໌ ກອມບໍຈາວ ປະທານສະພາຄູຣານໃຫຍ່ແຫ່ງມົງໂກລີ. ພ້ອມດຽວກັນນີ້, ກໍອວຍພອນໃຫ້ທ່ານ ເມິງຄ໌ບາທາຣ໌ ລັກຄະວາ ພ້ອມດ້ວຍຄະນະ ຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກໃນຊີວິດສ່ວນຕົວ ແລະ ຄອບຄົວ ແລະ ມີຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນໜ້າທີ່ອັນມີກຽດສະຫງ່າຂອງບັນດາທ່ານ ແລະ ເດີນທາງກັບປະເທດດ້ວຍຄວາມສະຫວັດດີພາບທຸກປະການ.

ໃນໂອກາດດຽວກັນ, ທ່ານ ເມິງຄ໌ບາທາຣ໌ ລັກຄະວາ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ກ່າວລາຍງານຜົນການມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ຂອງຕົນ ພ້ອມດ້ວຍຄະນະ ແລະ ກ່າວສະແດງຄວາມຂອບໃຈ ທີ່ ສປປ ລາວ ໄດ້ມອບໃຫ້ເປັນຂອງຂວັນ ໃຫ້ແກ່ສະພາຄູຣານໃຫຍ່ ກໍຄື ໂຕະຕັ່ງຈຳນວນ 50 ຊຸດ ແລະ ໄດ້ສົ່ງໄປມົງໂກລີແລ້ວຈຳນວນໜຶ່ງ.

(ກຸກກິກ ບຸດດາໄຊ)

## ສສຊ...

(ຕໍ່ຈາກໜ້າ 1)

ຄາດຄະເນຜົນໄດ້ຮັບ ເຊິ່ງການປັບປຸງກົດໝາຍສະບັບນີ້ ເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນໄລຍະໃໝ່ ເວົ້າສະເພາະກໍຄືປັບປຸງດ້ານກົງຈັກ, ບຸກຄະລາກອນທີ່ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ, ແຕ່ງຕັ້ງ ແລະ ຮັບຮອງເອົາ ແລະ ອື່ນໆ. ຮ່າງກົດໝາຍສະບັບດັ່ງກ່າວ ປະກອບມີ 8 ພາກ, 10 ໝວດ, 104 ມາດຕາ; ໃນນີ້, ໄດ້ເພີ່ມໃໝ່ 13 ມາດຕາ, ປັບປຸງ 61 ມາດຕາ, ຕັດອອກ 6 ມາດຕາ ແລະ ຮັກສາໄວ້ 37 ມາດຕາ. ຈາກນັ້ນ, ປະທານກອງປະຊຸມ ໄດ້ມີຄຳເຫັນເຈາະຈີ້ມເພື່ອເປັນທິດທາງໃນການປະກອບຄຳເຫັນ ພ້ອມທັງສະເໜີໃຫ້ສະມາຊິກສະພາແຫ່ງຊາດປະກອບຄຳເຫັນໃສ່ບັນດາຮ່າງກົດໝາຍ ເພື່ອໃຫ້ມີເນື້ອໃນຄົບຖ້ວນ ແລະ ຮັດກຸມຫຼາຍຂຶ້ນກວ່າເກົ່າ; ຫຼັງຈາກນັ້ນ, ຄະນະຮັບຜິດຊອບຮ່າງກົດໝາຍໄດ້ຂຶ້ນຊີ້ແຈງອະທິບາຍເພີ່ມຕື່ມກ່ຽວກັບບັນຫາຕ່າງໆທີ່ເຫັນວ່າສະມາຊິກສະພາແຫ່ງຊາດໃນແຕ່ລະເຂດເລືອກຕັ້ງໃຫ້ຄວາມສົນໃຈ; ພ້ອມດຽວກັນນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນສະຫຼຸບສັງລວມການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ.

ໃນວັນທີ 15 ພະຈິກ 2023 ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ສະມາຊິກສະພາແຫ່ງຊາດແຕ່ລະເຂດເລືອກຕັ້ງໄດ້ຮັບຟັງການສະເໜີກົດໝາຍ ວ່າດ້ວຍການປິ່ນປົວ (ສະບັບປັບປຸງ) ເຊິ່ງປະກອບມີທັງໝົດ 9 ພາກ, 4 ໝວດ, 72 ມາດຕາ; ໃນນັ້ນ, ປັບປຸງ 47 ມາດຕາ ແລະ ເພີ່ມເຂົ້າໃໝ່ 1 ພາກ, 15 ມາດຕາ ທີ່ສະເໜີໂດຍທ່ານ ດຣ. ບຸນແຝງ ພູມມະໄລສິດ ລັດຖະມົນຕີກະຊວງສາທາລະນະສຸກ ເຊິ່ງທ່ານໄດ້ຍົກໃຫ້ເຫັນສະພາບການຈັດຕັ້ງປະຕິບັດກົດໝາຍໄລຍະຜ່ານມາ, ເຫດຜົນຄວາມຈຳເປັນຂອງການປັບປຸງກົດໝາຍ, ຂະບວນການຄົ້ນຄວ້າປັບປຸງຮ່າງກົດໝາຍ, ໂຄງປະກອບ ແລະ ເນື້ອໃນສຳຄັນຂອງກົດໝາຍ ລວມເຖິງຄາດຄະເນຜົນໄດ້ຮັບພາຍຫຼັງຮ່າງກົດໝາຍສະບັບນີ້ຖືກຮັບຮອງ ແລະ ປະກາດໃຊ້ ເຊິ່ງໄລຍະຜ່ານມາພາຍຫຼັງກົດໝາຍສະບັບນີ້ໄດ້ຖືກຮັບຮອງ ແລະ ປະກາດໃຊ້ ຂະແໜງການສາທາລະນະສຸກ ໄດ້ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານການປິ່ນປົວ; ຜ່ານການຈັດຕັ້ງປະຕິບັດ ເຫັນວ່າ ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມກວດກາວຽກງານການບໍລິການປິ່ນປົວດີຂຶ້ນເທື່ອລະກ້າວ ແຕ່ອີງໃສ່ສະພາບເງື່ອນໄຂປັດຈຸບັນ ຈຶ່ງມີຄວາມຈຳເປັນທີ່ສຸດ ທີ່ຈະຕ້ອງໄດ້ມີການປັບປຸງເນື້ອໃນກົດໝາຍສະບັບດັ່ງກ່າວ ເພື່ອໃຫ້ມີຄວາມສອດຄ່ອງ ແລະ ແທດເໝາະກັບສະພາບເງື່ອນໄຂການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນປະຈຸບັນ, ສະພາບຕົວຈິງຂອງປະເທດເຮົາ ແລະ ການປ່ຽນແປງໃໝ່ຂອງໂລກ ແນໃສ່ພັດທະນາລະບົບການບໍລິການປິ່ນປົວສຸຂະພາບຂອງລາວ ໃຫ້ນັບມື້ວ່ອງໄວ, ມີຄຸນນະພາບ, ທັນສະໄໝ ສາມາດກວດສອບໄດ້, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ເທື່ອລະກ້າວ, ຫຼຸດຜ່ອນຫາງສຽງຂອງສັງຄົມ ລວມໄປເຖິງຈັນຍາບັນ, ຈັນຍາທຳຂອງແພດໝໍ; ພ້ອມນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ຍັງໄດ້ຮັບຟັງ ແລະ ປະກອບຄຳເຫັນໃສ່ກົດໝາຍ ວ່າດ້ວຍການຮັກສາສຸຂະພາບຂັ້ນຕົ້ນ (ສະບັບສ້າງໃໝ່) ຕື່ມອີກ. ພາຍຫລັງທີ່ສະມາຊິກສະພາແຫ່ງຊາດແຕ່ລະເຂດເລືອກຕັ້ງໄດ້ປະກອບຄຳເຫັນໃສ່ຮ່າງກົດໝາຍແຕ່ລະສະບັບສຳເລັດ, ຄະນະຮັບຜິດຊອບຮ່າງກົດໝາຍໄດ້ມີຄຳເຫັນຊີ້ແຈງອະທິບາຍເພີ່ມຕື່ມ ໃນບັນດາບັນຫາທີ່ເຫັນວ່າສະມາຊິກສະພາແຫ່ງຊາດ ໃຫ້ຄວາມສົນໃຈ; ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນສະຫຼຸບສັງລວມການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ.

(ກົງທະນູຄຳ ພິພັດເສລີ)

# ບົດສຳພາດປະທານສະພາປະຊາຊົນແຂວງຜົ້ງສາລີ

ຖັດຈາກທ່ານຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ທີ່ໄດ້ເປີດສາກໃຫ້ສຳພາດ, ທ່ານ ທອງສີ ເສົາສຸລິພົມ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 2, ປະທານສະພາປະຊາຊົນແຂວງຜົ້ງສາລີ ກໍໄດ້ໃຫ້ສຳພາດໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ ໄດ້ນຳພາ-ຊີ້ນຳໃນການເຄື່ອນໄຫວຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນແຕ່ລະຄັ້ງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຕິດພັນກັບການລົງພົບປະ ໂອ້ລົມກັບພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ, ໄດ້ຮັບ ແລະ ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນທີ່ສະເໜີຫາສະພາປະຊາຊົນແຂວງ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິຂອງສະພາແຫ່ງຊາດ ແລະ ມະຕິຂອງສະພາປະຊາຊົນແຂວງ ຂອງຄະນະບໍລິຫານງານພັກແຂວງ ມີບາງຂໍ້ສັງເກດ ດັ່ງນີ້:

ໄລຍະໜຶ່ງປີຜ່ານມາ ຕົ້ນຕໍແມ່ນສະພາປະຊາຊົນແຂວງຜົ້ງສາລີ ໄດ້ສືບຕໍ່ຈັດຕັ້ງຜັນຂະຫຍາຍເນື້ອໃນມະຕິກອງປະຊຸມໃຫຍ່ຂອງພັກ ກໍຄືຂອງແຂວງ, ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນແຂວງ ໂດຍສະເພາະສຸມໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ເຮັດໃຫ້ເສດຖະກິດມະຫາພາກຂະຫຍາຍຕົວສະເລ່ຍ ຄາດວ່າຈະບັນລຸ 6,61% ໃນນີ້, ຕົ້ນຕໍແມ່ນສຸມໃສ່ການພັດທະນາເສດຖະກິດ-ສັງຄົມຕາມທ່າແຮງບົ່ມຊ້ອນຂອງແຂວງ ເພື່ອແນໃສ່ແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕາມແນວທາງນະໂຍບາຍຂອງພັກ; ໄດ້ເອົາໃຈໃສ່ນຳພາ-ຊີ້ນຳວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢ່າງແຂງແຮງ ເຮັດໃຫ້ສັງຄົມມີຄວາມສະຫງົບໂດຍພື້ນຖານ, ດ້ວຍການຫັນ 2 ກຳລັງ ລົງກໍ່ສ້າງຮາກຖານການເມືອງ ທັງສຸມໃສ່ປັບປຸງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກອງຫຼອນ ຢູ່ຂັ້ນບ້ານ ທັງຝຶກອົບຮົມ ສິດ, ໜ້າທີ່ ໃຫ້ແກ່ເຂົາເຈົ້າ ເພື່ອເຄື່ອນໄຫວເຮັດໜ້າທີ່ກຳລັງ ປກຊ-ປກສ ຢູ່ຂັ້ນບ້ານ; ຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ ທີ່ມີຕະຫຼາດຮອງຮັບ ໂດຍສຸມໃສ່ສົ່ງເສີມການປູກ ແລະ ສົ່ງອອກຕົ້ນໄມ້ອຸດສາຫະກຳ ແລະ ພືດກະສິກຳ ເຊັ່ນ: ຊາແຫ້ງຈຳນວນ 607,54 ໂຕນ ລວມມູນຄ່າສົ່ງອອກ 58,98 ຕື້ກີບ, ຢາງພາລາ, ອ້ອຍລຳ ໄດ້ທັງໝົດ 495.983 ໂຕນ, ມູນຄ່າ 421,58 ຕື້ກີບ, ກ້ວຍ, ໝາກແໜ່ງ ແລະ ອື່ນໆ (ຕະຫຼາດສົ່ງອອກແມ່ນ ສປ ຈີນ).



ປະທານສະພາປະຊາຊົນແຂວງຜົ້ງສາລີ ຍັງໄດ້ຍົກໃຫ້ເຫັນບັນຫາເຄັ່ງຮ້ອນຂອງແຂວງທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂ ເປັນຕົ້ນແມ່ນບັນຫາຄ່າຄອງຊີບສູງ: ເງິນເຟີ້, ອັດຕາແລກປ່ຽນສະກຸນເງິນຕາຕ່າງປະເທດ, ສະກຸນເງິນທ້ອງຖິ່ນ ໂດຍສະເພາະຕາມຊາຍແດນ ເຮັດໃຫ້ລາຄາສິນຄ້າໃນທ້ອງຕະຫຼາດແພງຂຶ້ນເກືອບທຸກຢ່າງ, ຄ່າຄອງຊີບນັບມື້ນັບຖີບໂຕສູງຂຶ້ນ ຕົວຢ່າງ: ລາຄາເຂົ້າ 1 ກິໂລ ເທົ່າກັບ 18.000-19.000 ກີບ, ຊີ້ນໝູ 1 ກິໂລ ເທົ່າກັບ 80.000 ກີບ, ຊີ້ນຄວາຍ 1 ກິໂລ ເທົ່າກັບ 100.000 ກີບ ແລະ ອື່ນໆ ບັນຫາເຫຼົ່ານີ້ ມີຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າຢ່າງໜັກໜ່ວງ ເຮັດໃຫ້ເຂົາເຈົ້າບໍ່ມີແນວຄິດອຸ່ນອ່ຽນຕໍ່ການປະຕິບັດໜ້າທີ່ວຽກງານຢ່າງເຕັມເມັດເຕັມໜ່ວຍ, ຈາກບັນຫາດັ່ງກ່າວນັ້ນ ເກີດມີປະກົດການຫຍໍ້ທໍ້ຫຼາຍດ້ານ.

ວິທີການແກ້ໄຂຄື: ສະເໜີໃຫ້ຄະນະພັກ ແລະ ອົງການປົກຄອງແຕ່ລະຂັ້ນ ເອົາໃຈໃສ່ເຮັດໜ້າທີ່ສຶກສາອົບຮົມໃຫ້ແກ່ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຮັບຮູ້ເຂົ້າໃຈຄວາມຫຍຸ້ງຍາກທາງດ້ານເສດຖະກິດຂອງໂລກ, ພາກພື້ນ ແລະ ຂອງປະເທດ, ສືບຕໍ່ຊຸກຍູ້ການຜະລິດພາຍໃນໃຫ້ສູງຂຶ້ນ ເພື່ອບໍລິໂພກພາຍໃນ ແລະ ເປັນສິນຄ້າສົ່ງອອກ, ສາມາດກຸ້ມຕົນເອງ ເພື່ອຫຼຸດຜ່ອນການນຳເຂົ້າ ເປັນຕົ້ນແມ່ນປະເພດປາ, ຊີ້ນໝູ ແລະ ຜັກຈຳນວນໜຶ່ງ ແລະ ເພື່ອເປັນການຍົກສູງບົດບາດຂອງເງິນກີບລາວໃຫ້ສູງຂຶ້ນ.

ອີກບັນຫາໜຶ່ງແມ່ນປາກົດການຫຍໍ້ທໍ້: ເຖິງແມ່ນວ່າຈະເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢ່າງຕັ້ງໜ້າ, ເອົາໃຈໃສ່ປະຕິບັດວາລະແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ, ແຕ່ກໍຍັງເກີດມີປາກົດການຫຍໍ້ທໍ້ ແລະ ຄວາມບໍ່ສະຫງົບໃນສັງຄົມຫຼາຍບັນຫາ ເປັນຕົ້ນແມ່ນບັນຫາຢາບ້າຢາເສບຕິດຍັງແຜ່ລາມຢູ່ໃນຕົວເມືອງ ແລະ ຊົນນະບົດ, ບັນຫາຂີ້ລັກງັດແງະ, ອຸບັດເຫດທ້ອງຖະໜົນ, ອາວຸດເສິກ-ອາວຸດເຖື່ອນ, ບັນຫາສາສະໜາ ແລະ ອື່ນໆ

**ວິທີການແກ້ໄຂຄື:** ສະເໜີໃຫ້ອົງການປົກຄອງ ເພີ່ມທະວີວຽກງານກວດກາ, ກວດການ, ກວດສອບ; ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕິດພັນກັບການປະຕິບັດວາລະແຫ່ງຊາດໃຫ້ເຂັ້ມງວດ ແລະ ແທດເຖິງຕົວຈິງ ດ້ວຍການແຕ່ງຕັ້ງຄະນະສະເພາະກິດຂັ້ນແຂວງ ເພື່ອລົງເຄື່ອນໄຫວຕິດຕາມກວດກາ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ;

ນອກນັ້ນ, ຍັງມີບັນຫາການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ເຖິງວ່າ: ຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ໄດ້ມີຄວາມພະຍາຍາມນຳພາ-ຊີ້ນຳການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າຢ່າງຈິດຈໍ່ ດ້ວຍການຫັນພະນັກງານ ລົງກໍ່ສ້າງຮາກຖານການເມືອງ-ພັດທະນາຊົນນະບົດຮອບດ້ານ ດ້ວຍການເກັບຂໍ້ມູນ, ນຳພາສ້າງແຜນພັດທະນາເສດຖະກິດ-ສັງຄົມຢູ່ຂັ້ນບ້ານ ແລະ ແບ່ງຄວາມຮັບຜິດຊອບການປະຕິບັດແຜນການຢ່າງຈະແຈ້ງລະຫວ່າງແຂວງ, ເມືອງ, ບ້ານ ແລະ ພາກສ່ວນເສດຖະກິດແລ້ວກໍຕາມ ການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ຢູ່ຊົນນະບົດກໍຍັງບໍ່ທັນໄດ້ບັນລຸຄາດໝາຍຕາມມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ຂອງອົງຄະນະພັກແຂວງ ໄດ້ວາງອອກ ເຊັ່ນ: ຜ່ານການປະເມີນຜົນຄວາມທຸກຍາກຕາມດຳລັດ 348/ລບ ເຫັນວ່າ ຜົ້ງສາລີ ຍັງມີບ້ານທຸກຍາກ ກວມ 69,88% ຂອງຈຳນວນບ້ານໃນທົ່ວແຂວງ, ມີຄອບຄົວທຸກຍາກ ກວມ 57,03% ຂອງຈຳນວນຄອບຄົວໃນທົ່ວແຂວງ ເຮັດໃຫ້ຈຳນວນພົນລະເມືອງໃນຊົນນະບົດຫຼັ່ງໄຫຼເຂົ້າມາຕົວເມືອງ ເຮັດໃຫ້ຕົວເມືອງແອອັດ ແລະ ບໍ່ມີວຽກເຮັດງານທຳ ເປັນບັນຫາໃຫ້ແກ່ການນຳພາ-ຊີ້ນຳຂອງຄະນະພັກ ແລະ ອົງການປົກຄອງແຕ່ລະຂັ້ນ ກາຍເປັນບັນຫາສັງຄົມຕ້ອງໄດ້ສືບຕໍ່ແກ້ໄຂ ເປັນຕົ້ນແມ່ນການຈັດສັນອາຊີບຄົງທີ່ ແລະ ພູມລຳເນົາຄົງທີ່.

**ວິທີການແກ້ໄຂຄື:** ໃນເງື່ອນໄຂເສດຖະກິດ-ການເງິນຂອງປະເທດ ພວມປະເຊີນໜ້າກັບສິ່ງທ້າທາຍຫຼາຍດ້ານ, ຄະນະພັກ ແລະ ອົງການປົກຄອງທຸກຂັ້ນ ສືບຕໍ່ສຶກສາອົບຮົມ, ໂຄສະນາເຜີຍແຜ່ແນວທາງແຜນນະໂຍບາຍຂອງພັກໃຫ້ແກ່ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າຮັບຮູ້ເຂົ້າໃຈ, ປຸກລະດົມ ປູກຈິດສຳນຶກ ໃຫ້ເຂົາເຈົ້າມີຄວາມຮັບຮູ້ ເຂົ້າໃຈຕໍ່ແນວທາງ, ລະບຽບກົດໝາຍ, ຕັ້ງໜ້າປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນເປັນເຈົ້າການໃນການແກ້ໄຂຄວາມທຸກຍາກ ດ້ວຍການຂຸດຄົ້ນຄວາມອາດສາມາດຂອງທ້ອງຖິ່ນ, ຊຸກຍູ້ໃຫ້ພໍ່ແມ່ປະຊາຊົນສ້າງອາຊີບ, ການປູກ, ການລ້ຽງ ເພື່ອກ້າວໄປເຖິງເພິ່ງຕົນເອງ ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງເທື່ອລະກ້າວ.

ທ່ານ ທອງສີ ເສົາສຸລິພົມ ໃຫ້ຮູ້ຕື່ມວ່າ: ຜ່ານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຖ້າທຽບໃສ່ກ່ອນບໍ່ທັນກຳນົດແຜນວາລະແຫ່ງຊາດແລ້ວ ເຫັນວ່າການສູ້ຊົນຈັດຕັ້ງປະຕິບັດບາງຕົວຊີ້ວັດໃນການຜະລິດເພື່ອທົດແທນການນຳເຂົ້າ ແລະ ການຜະລິດສິນຄ້າ ເພື່ອສົ່ງອອກ, ການກຳນົດຈຸດສູມການຜະລິດ ແລະ ບາງກິດຈະກຳທີ່ເກີດມີໜໍ່ແໜງໃໝ່ ເຫັນວ່າ ມີຜົນໄດ້ຮັບ ແລະ ພົ້ນເດັ່ນກວ່າ ກ່ອນບໍ່ທັນກຳນົດແຜນວາລະແຫ່ງຊາດ.

ວຽກງານການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳເທື່ອລະກ້າວ ເປັນຕົ້ນ ໄດ້ສຶກສາອົບຮົມ, ບຳບັດປິ່ນປົວຜູ້ຕິດຢາເສບຕິດ ຫາຍດີ 641 ຄົນ ຍິງ 23 ຄົນ, ສາມາດທັບມ້າງເປົ້າໝາຍຄ້າ-ຂາຍຢາເສບຕິດ ໄດ້ 265 ເປົ້າໝາຍ ຈາກ 362 ເປົ້າໝາຍ; ເຖິງຢ່າງໃດກໍຕາມ ການຈັດຕັ້ງປະຕິບັດວາລະແຫ່ງຊາດຍັງພົບຄວາມຫຍຸ້ງຍາກ ເປັນຕົ້ນແມ່ນຍັງມີຂະແໜງການຂັ້ນແຂວງ ແລະ ເມືອງຈຳນວນໜຶ່ງ ຍັງບໍ່ທັນຈັດຕັ້ງປະຕິບັດຕາມສິດ ແລະ ໜ້າທີ່ຂອງຕົນຢ່າງແຂງແຮງ, ແທດຕົວຈິງ, ເຂັ້ມງວດ ແລະ ຜົນສຳເລັດບໍ່ທັນພົ້ນເດັ່ນ; ຍັງບໍ່ທັນກຳແໜ້ນຢ່າງເລິກເຊິ່ງຕໍ່ຄຳສັ່ງຂອງກົມການເມືອງສູນກາງພັກ, ຍັງບໍ່ທັນສາມາດຫັນເປັນອັນລະອຽດເຂົ້າໃນພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ແລະ ບໍ່ສາມາດຈຳແນກໄດ້ຂໍ້ມູນທີ່ເປັນບູລິມະສິດໃນການຈັດຕັ້ງປະຕິບັດ; ການຈັດຕັ້ງຜັນຂະຫຍາຍປະຕິບັດວາລະແຫ່ງຊາດຍັງຊັກຊ້າ, ການໂຄສະນາສ້າງຄວາມຮູ້ໃນທົ່ວສັງຄົມຍັງບໍ່ທັນເລິກເຊິ່ງ, ທົ່ວເຖິງທຸກເປົ້າໝາຍ ໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກ.

ສະພາປະຊາຊົນແຂວງຜົ້ງສາລີ ຈຶ່ງໄດ້ມີທິດທາງຈຸດສຸມແກ້ໄຂບັນຫາດັ່ງກ່າວໃນຕໍ່ໜ້າ ໂດຍຈະສຸມໃສ່ຊຸກຍູ້ຫົວໜ່ວຍທຸລະກິດ ກຸ່ມການຜະລິດຕ່າງໆ, ຍູ້ແຮງການຜະລິດພາຍໃນໃຫ້ຫຼາຍຂຶ້ນ ພ້ອມທັງປຸກລະດົມໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ມີສະຕິເຄົາລົບລະບຽບກົດໝາຍ ແລະ ຕັ້ງໜ້າປະກອບສ່ວນ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດມາດຕະການປະຢັດມັດທະຍັດຢ່າງເຂັ້ມງວດ; ເອົາໃຈໃສ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ, ການແກ້ໄຂໜໍ່ແໜງທີ່ກໍ່ໃຫ້ເກີດປາກົດການຫຍໍ້ທໍ້ໃນສັງຄົມໃຫ້ແທດເຖິງຕົວຈິງ ແລະ ເຂັ້ມງວດກວ່າເກົ່າ; ສຸມໃສ່ ຫັນພະນັກງານລົງກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານຢ່າງມີຈຸດສຸມ ໂດຍຫັນຄຳສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ 097/ກມສພ, ລົງວັນທີ 18 ກຸມພາ 2020 ວ່າດ້ວຍການເພີ່ມທະວີການນຳພາຊີ້ນຳຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ຄຳແນະນຳຂອງຄະນະປະຈຳພັກແຂວງ ສະບັບເລກທີ 3059/ຄພຂ ເປັນອັນລະອຽດເຂົ້າໃນທິດທາງການແກ້ໄຂຄວາມທຸກຍາກຢ່າງເປັນລະບົບ; ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ ດ້ວຍຄວາມຮັບຜິດຊອບສູງຂອງແຕ່ລະພາກສ່ວນ ແລະ ໃຫ້ປາກົດຜົນເປັນຈິງ; ຄະນະພັກ, ຄະນະພະແນກ ແລະ ພາກສ່ວນກ່ຽວຂ້ອງຕ້ອງໄດ້ຈັດຕັ້ງເຊື່ອມຊຶມຄົ້ນຄວ້າ, ກຳແໜ້ນບັນດາເນື້ອໃນຄຳສັ່ງຂອງກົມການເມືອງສູນກາງພັກ ແລະ ຄຳແນະນຳ ວ່າດ້ວຍການຈັດຕັ້ງປະຕິບັດວາລະແຫ່ງຊາດ ເພື່ອຊີ້ນຳໃນການຈັດຕັ້ງປະຕິບັດຕົວຈິງດ້ວຍຄວາມຮັບຜິດຊອບສູງ ແລະ ຜັນຂະຫຍາຍໃຫ້ເປັນແຜນລະອຽດຕາມພາລະບົດບາດໜ້າທີ່ຂອງແຕ່ລະພາກສ່ວນ ແລະ ຊີ້ນຳໃນການຈັດຕັ້ງປະຕິບັດໃຫ້ແທດຕົວຈິງ.



# ສສຊ ສະເໜີຫຼາຍບັນຫາ ໃຫ້ລັດຖະບານພິຈາລະນາ ແລະ ແກ້ໄຂຢ່າງຮີບດ່ວນ

ໃນວັນທີ 31 ຕຸລາ 2023 ເປັນມື້ທຳອິດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ບຸນທາມ ພຸດທະວົງສາ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໄດ້ມີຄຳເຫັນຕໍ່ບົດລາຍງານແຜນພັດທະນາເສດຖະກິດ-ສັງຄົມ ທີ່ລັດຖະບານໄດ້ນຳສະເໜີໃນວາລະທຳອິດຂອງກອງປະຊຸມດັ່ງກ່າວ ເຊິ່ງທ່ານໄດ້ມີຄຳເຫັນວ່າ:

ຂໍສະແດງຄວາມຊົມເຊີຍຕໍ່ຄວາມຕັ້ງໜ້າພະຍາຍາມຂອງລັດຖະບານ ທີ່ໄດ້ນຳພາຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປີ 2023 ທັງຍົກໃຫ້ເຫັນຫຼາຍບັນຫາທີ່ປະສົບຜົນສຳເລັດ ແລະ ຫຼາຍບັນຫາຄົງຄ້າງໃນການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ເຊິ່ງສະພາແຫ່ງຊາດ ກໍໄດ້ມີມະຕິຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອຜ່ານມານັ້ນ ພິເສດຂ້າພະເຈົ້າຂໍສະແດງຄວາມສະໜັບສະໜູນຕໍ່ບົດປະກອບຄຳເຫັນຂອງທ່ານຮອງປະທານສະພາແຫ່ງຊາດທີ່ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດມີຄຳເຫັນດັ່ງກ່າວໄປນັ້ນ ຂ້າພະເຈົ້າຮັບຮູ້ ແລະ ເຫັນດີເປັນເອກະພາບວ່າ ໃນໄລຍະຜ່ານມາປະເທດພວກເຮົາຍັງປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ ເຊິ່ງແມ່ນຄວາມຈຳເປັນທາງດ້ານພາວະວິໄສ ແລະ ອັດຕະວິໄສ ທີ່ບໍ່ສາມາດຫຼີກລ່ຽງໄດ້ໃນປັດຈຸບັນ ອັນໄດ້ສົ່ງຜົນກະທົບຕໍ່ຄວາມຫຍຸ້ງຍາກໃນການດຳລົງຊີວິດຂອງພໍ່ແມ່ປະຊາຊົນ ກໍຄືທົ່ວສັງຄົມຢ່າງຫຼວງຫຼາຍໜັກໜ່ວງ ດັ່ງນັ້ນ ໃນຖານະທີ່ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໄດ້ເປັນຕົວແທນໃຫ້ແກ່ສິດ ແລະ ຜົນປະໂຫຍດຂອງຊາວນະຄອນຫຼວງວຽງຈັນ ບໍ່ສະເພາະຜູ້ມີສິດເລືອກຕັ້ງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງຂອງພວກເຮົາ ກໍໄດ້ເອົາໃຈໃສ່ເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ບົດບາດຂອງຕົນເອງຢ່າງຕັ້ງໜ້າ ປະກອບສ່ວນປຸກລະດົມທົ່ວສັງຄົມ ທົ່ວປວງຊົນເຂົ້າຮ່ວມປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງນະຄອນຫຼວງວຽງຈັນ ໄປຄຽງຄູ່ກັບຕິດຕາມກວດກາຊຸກຍູ້ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານຢ່າງຕໍ່ເນື່ອງ ແຕ່ເຖິງຢ່າງໃດກໍຕາມ ອີງໃສ່ຂໍ້ມູນຕົວຈິງ ແລະ ຜົນຂອງການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ການຕິດຕາມກວດກາ ສັງເກດເຫັນວ່າ ການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ ຍັງເປັນສິ່ງທ້າທາຍຫຼາຍສຳລັບພາລະກິດລວມຂອງພວກເຮົາ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງນະຄອນຫຼວງ ຂໍສະເໜີຄວາມເຫັນແລກປ່ຽນບາງຈິດໃຈ ດັ່ງຕໍ່ໄປນີ້.



1/. ສະເໜີໃຫ້ທ່ານນາຍົກລັດຖະມົນຕີ ກໍຄືລັດຖະບານ ໄດ້ຄົ້ນຄວ້າວ່າແຜນການສະເພາະໜ້າ ຈະສືບຕໍ່ຮັກສາສະຖຽນລະພາບທາງດ້ານເສດຖະກິດຂອງຊາດ ໃຫ້ໝັ້ນທ່ຽງ ແລະ ກັບເຂົ້າສະພາບປົກກະຕິ ຮັກສາຄ່າເງິນກີບໃຫ້ຊົງຕົວບໍ່ໃຫ້ອ່ອນຄ່າໄປກວ່ານີ້ ຄຽງຄູ່ກັບການວາງແຜນໄລຍະຍາວ ເພື່ອຟື້ນຟູເສດຖະກິດຂອງຊາດ ໃຫ້ມີຄວາມໝັ້ນທ່ຽງ ແລະ ຍືນຍົງ.

2/. ສະເໜີໃຫ້ເອົາໃຈໃສ່ຊຸກຍູ້ຊີ້ນຳບັນດາກະຊວງ ໂດຍສະເພາະທີ່ນອນຢູ່ໃນຂົງເຂດເສດຖະກິດ ໃຫ້ໄດ້ມີຄວາມຮັບຜິດຊອບ ເປັນເຈົ້າການໃນການຄົ້ນຄວ້າກົນໄກວິທີການແກ້ໄຂສະພາບວິກິດການໃນຄັ້ງນີ້ ເນື່ອງຈາກວ່າ ຜ່ານການເກັບກຳຄຳຄິດຄຳເຫັນຂອງປະຊາຊົນ, ສັງຄົມ ກໍຄືຜູ້ມີສິດເລືອກຕັ້ງເຫັນວ່າການເອົາໃຈໃສ່ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຫຍຸ້ງຍາກທາງດ້ານເສດຖະກິດການເງິນຂອງບັນດາກະຊວງກ່ຽວຂ້ອງຍັງບໍ່ທັນມີຄວາມແຂງແຮງເທົ່າທີ່ຄວນ ບັນດາທ່ານຄະນະລັດຖະບານທີ່ສະພາແຫ່ງຊາດ ໄດ້ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ຄວນສະແດງເຖິງຄວາມຮັບຜິດຊອບຂອງຕົນໃຫ້ເປັນຮູບປະທຳຕື່ມ ຫຼືຈະໃຫ້ສະພາແຫ່ງຊາດ ເປັນຜູ້ຕິດຕາມຫຼືວ່າຊີ້ນຳຄວາມຮັບຜິດຊອບນັ້ນຕື່ມອີກກໍຍິ່ງເປັນການດີ.

3/. ສະເໜີໃຫ້ເອົາໃຈໃສ່ຊຸກຍູ້ສົ່ງເສີມຈຸລະວິສາຫະກິດ ວິສາຫະກິດຂະໜາດນ້ອຍຂະໜາດກາງ ໃນການເຂົ້າຫາແຫຼ່ງທຶນ ເພື່ອທຳການຜະລິດໃຫ້ຫຼາຍ ຕັດຮອນບາງຂອດບາງຂັ້ນຕອນ ໃນການເຂົ້າຫາແຫຼ່ງທຶນໃຫ້ສັ້ນ ແລະ ສະດວກກວ່າເກົ່າ ເປັນຕົ້ນແມ່ນການສົ່ງເສີມມາດຕະການສົ່ງເສີມການຜະລິດ ແລະ ມາດຕະການສົ່ງເສີມການບໍລິໂພກ ຕ້ອງສົມຄູ່ກັນ.

4/. ຄວນກຳນົດແຜນຍຸດທະສາດ ແລະ ການນຳໃຊ້ ຫຼື ອະນຸຍາດໃຫ້ຂຸດຄົ້ນແຮ່ທາດຕ່າງໆ ທີ່ມີຢູ່ປະເທດເຮົານັ້ນຢ່າງລະອຽດ ແລະ ຮັດກຸມ ແຮ່ທາດໃດຄວນຂຸດຄົ້ນ ແລະ ນຳໃຊ້ໃນປັດຈຸບັນ ແລະ ແຮ່ທາດໃດຄວນເກັບຮັກສາໄວ້ໃນຕໍ່ໜ້າ ເພື່ອຮັບປະກັນຄວາມໝັ້ນຄົງຂອງຊາດໃນອະນາຄົດ ແລະ ການອະນຸຍາດຂຸດຄົ້ນແຮ່ທາດກໍຄວນຄຳນຶງເຖິງຜົນກະທົບຕໍ່ປະຊາຊົນ ແລະ ຜົນປະໂຫຍດຂອງປະເທດຊາດ ທີ່ໄດ້ຮັບເປັນຫຼັກ ເຊິ່ງນະຄອນຫຼວງວຽງຈັນກໍແມ່ນໜຶ່ງໃນການຖືກກຳນົດໃຫ້ເປັນພື້ນທີ່ໃຫ້ອະນຸຍາດຂຸດຄົ້ນແຮ່ທາດຫຼາຍໂຄງການໃນຜ່ານມາ ການລົງຕິດຕາມກໍເຫັນວ່າ ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ ການໄລ່ລຽງທາງດ້ານຜົນປະໂຫຍດເຫັນວ່າບໍ່ດຸ່ນດ່ຽງກັນລະຫວ່າງເນື້ອທີ່ສຳປະທານ ແລະ ພັນທະຕ່າງໆທີ່ລັດໄດ້ຮັບການປະເມີນສະພາບແວດລ້ອມ ຜົນກະທົບໃນຕໍ່ໜ້າ ແລະ ຍາວນານ ກໍຍັງບໍ່ສາມາດຄາດກະໄດ້ວ່າຈະມີຄວາມສ່ຽງແນວໃດ ເປັນຕົ້ນແມ່ນບັນຫາດິນຍຸບທີ່ອາດຈະເກີດຂຶ້ນໃນຕໍ່ໜ້າ ສິ່ງທີ່ສຳຄັນແມ່ນນະຄອນຫຼວງວຽງຈັນເປັນເມືອງຫຼວງຂອງປະເທດ ເປັນສູນກາງທາງດ້ານການເມືອງ ເສດຖະກິດ ວັດທະນະທຳ, ເປັນທີ່ຕັ້ງສະຖານສຳຄັນຂອງພັກ, ລັດ. ພ້ອມນີ້, ນະຄອນຫຼວງວຽງຈັນກໍຈັດຕັ້ງປະຕິບັດດຳລັດວ່າດ້ວຍແຜນຜັງຕົວເມືອງລວມຂອງນະຄອນຫຼວງ ໂດຍໄດ້ກຳນົດ 7 ເມືອງເປັນຂອງເຂດອະນຸລັກຄວາມສວຍງາມສົມດູນ ແລະ ຄວາມເປັນລະບຽບຮຽບຮ້ອຍ ດັ່ງນັ້ນ, ການອະນຸຍາດໃຫ້ລົງທຶນຂຸດຄົ້ນໃນນະຄອນຫຼວງວຽງຈັນ ຈຶ່ງເຫັນວ່າບໍ່ສອດຄ່ອງກັບດຳລັດ ເລກທີ 372 ຂອງນະຄອນຫຼວງວຽງຈັນ, ລົງວັນທີ 26 ເດືອນທັນວາ 2022.

5/. ສະເໜີໃຫ້ລັດຖະບານກວດກາຄືນບັນດາໂຄງການລົງທຶນທີ່ໄດ້ຈັດຕັ້ງປະຕິບັດຢູ່ນະຄອນຫຼວງວຽງຈັນ ເປັນຕົ້ນແມ່ນໂຄງການໂລຈິດສະຕິກ ຢູ່ເຂດເມືອງຫາດຊາຍຟອງ ທີ່ສົ່ງຜົນກະທົບຕໍ່ປະຊາຊົນເຂດດັ່ງກ່າວ ແຕ່ມາເຖິງປັດຈຸບັນ ກໍຍັງບໍ່ໄດ້ຮັບການແກ້ໄຂໃຫ້ສຳເລັດ ເປັນຕົ້ນແມ່ນການແກ້ໄຂ້ຄ່າຊົດເຊີຍການດັດແກ້ໃບຕາດິນໃຫ້ແກ່ປະຊາຊົນ ຖ້າຍັງແກ່ຍາວຄືຢູ່ແນວນີ້ ຄວນໃຫ້ພິຈາລະນາຕື່ມວ່າ ຈະສືບຕໍ່ ຫຼືບໍ່ ເຊິ່ງບົດລາຍງານຂອງທ່ານນາຍົກລັດຖະມົນຕີ ກໍຍົກໃຫ້ເຫັນວ່າ ຍັງບໍ່ໄດ້ຈັດບູລິມະສິດໃນການແກ້ໄຂບັນຫາດັ່ງກ່າວນີ້ ເຊິ່ງເປັນບັນຫາທີ່ອ່ອນໄຫວຫຼາຍຢູ່ໃນສັງຄົມຮາກຫຍ້າ ຫຼື ວ່າສັງຄົມພື້ນຖານ.

ຂົງເຂດວັດທະນະທຳ ສະເໜີໃຫ້ພິຈາລະນາແກ້ໄຂຄູອາສາສະໝັກ ໃຫ້ໄດ້ບັນຈຸເຂົ້າເປັນລັດຖະກອນ ບັນຫາຄູປະລະການສອນ ເພື່ອອອກໄປສ້າງຊີວິດຄອບຄົວເພີ່ມທະວີຂຶ້ນຍ້ອນສະພາບເສດຖະກິດຫຍຸ້ງຍາກ ບັນຫາການສຶກສາບໍ່ໄດ້ຄຸນນະພາບ ບັນຫາການປິດໂຕຂອງໂຮງຮຽນລັດ ແລະ ບັນຫາການກຳນົດຄ່າຮຽນແພງຂອງບັນດາໂຮງຮຽນເອກະຊົນ ອັນນີ້ຂ້າພະເຈົ້າຄິດວ່າ ຢາກໃຫ້ລັດຖະບານ ກໍຄືກະຊວງກ່ຽວຂ້ອງໄດ້ທົບທວນວິເຄາະວິໄຈຄືນຕື່ມວ່າການສຶກສາຂອງພວກເຮົາ ມັນຄຸນນະພາບຕໍ່າຍ້ອນຫຍັງ ຍ້ອນລະບົບການສຶກສາບໍ ຫຼືວ່າເປັນຍ້ອນຕຳລາສອນ ຫຼືເປັນຍ້ອນບຸກຄະລາກອນຄູ ແລະ ສະເໜີໃຫ້ຄົ້ນຄວ້າພິຈາລະນາແກ້ໄຂບັນຫາແຮງງານທີ່ຫຼັ່ງໄຫຼໄປເຮັດວຽກຢູ່ຕ່າງປະເທດ ເຊິ່ງຈະມີຜົນກະທົບຕໍ່ການຜະລິດພາຍໃນປະເທດ ເກີດສະພາບຂາດແຄນແຮງງານພາຍໃນປະເທດ ຍ້ອນຄ່າຈ້າງແຮງງານຕໍ່າ ລັດຖະບານຈະມີແຜນການແກ້ໄຂແນວໃດ ອັນນີ້ເປັນບັນຫາໃຫຍ່ ເພາະຜ່ານມານີ້ ເຫັນວ່າຄ່າແຮງງານຂອງປະເທດເຮົານີ້ຢູ່ອັນດັບທີ 9 ອັນນັ້ນແມ່ນບັນຫາທີ່ຂ້າພະເຈົ້າຢາກສະເໜີ.

**ຮຽບຮຽງໂດຍ:**
**ກົງໃຈ ແສງອຳພັນ**

# ຝຶກອົບຮົມຄວາມຮູ້ພື້ນຖານ ໃນການນຳໃຊ້ຄອມພິວເຕີ ແລະ ວຽກງານການຮັບຄຳຮ້ອງ-ຄຳສະເໜີຂອງປະຊາຊົນ



(ສພຊ) ສະພາປະຊາຊົນແຂວງວຽງຈັນ ໄດ້ຈັດກອງປະຊຸມຝຶກອົບຮົມໃນຫົວຂໍ້: ຄວາມຮູ້ພື້ນຖານໃນການນຳໃຊ້ຄອມພິວເຕີ, ການນຳໃຊ້ World, Exel, PowerPoint ແລະ ວຽກງານການຮັບຄຳຮ້ອງ-ຄຳສະເໜີຂອງປະຊາຊົນບັນດາເຜົ່າ ໂດຍການເປັນປະທານຂອງທ່ານ ນາງ ຈັນທະຄອນ ສີອຳພອນ ຮອງປະທານສະພາປະຊາຊົນແຂວງ ເມື່ອເດືອນຕຸລາຜ່ານມາ ເຊິ່ງມີຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ດຳເນີນໃນຮູບແບບບັນລະຍາຍ, ມີບັນຍາກາດທີ່ຟົດຟື້ນ ວິທະຍາກອນແຕ່ລະທ່ານ ມີຄວາມເອົາໃຈໃສ່ສະເໜີແຕ່ລະຫົວຂໍ້, ການອະທິບາຍຊີ້ແຈງ ແລະ ຖ່າຍທອດບົດຮຽນແຕ່ລະດ້ານຈະແຈ້ງ, ເຂົ້າໃຈງ່າຍ, ສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນ ທັງນີ້, ກໍເພື່ອເປັນການຍົກສູງຄວາມຮູ້, ຄວາມສາມາດ ດ້ານການນຳໃຊ້ວຽກງານໄອທີເຂົ້າໃນການປະຕິບັດວຽກງານຂອງຕົນ ເພື່ອເປັນບົດຮຽນໃຫ້ແກ່ເສນາທິການຂອງສະພາປະຊາຊົນແຂວງວຽງຈັນໃນການນຳໃຊ້ລະບົບຄອມພິວເຕີ, ການນຳໃຊ້ World, Exel, Power-Point ແລະ ຮັບຮູ້ໃນການຮັບຄຳຮ້ອງ, ຄຳສະເໜີ ໃຫ້ໄປຕາມລະບົບສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.



ຕອນທ້າຍກອງປະຊຸມ, ທ່ານ ນາງ ຈັນທະຄອນ ສີອຳພອນ ຍັງໃຫ້ຄຳຄິດຄຳເຫັນໃຫ້ພະນັກງານສະພາປະຊາຊົນແຂວງ ຈົ່ງສຸມສະຕິປັນຍາ, ຄົ້ນຄວ້າເພື່ອສາມາດນຳໄປຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງໃຫ້ດີຂຶ້ນກວ່າເກົ່າ.



# ປະເມີນວຽກງານການຈັດຕັ້ງປະຕິບັດ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ



(ສພຊ) ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນຄຳສັ່ງຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ຖືກຕ້ອງ, ສອດຄ່ອງ, ເອກະພາບ ແລະ ທັນຕາມແຜນກຳນົດເວລາ ເມື່ອເດືອນຕຸລາຜ່ານມາ, ຢູ່ທີ່ສະພາປະຊາຊົນແຂວງສາລະວັນ ໜ່ວຍພັກຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ທີ່ຂຶ້ນກັບຄະນະພັກຮາກຖານສະພາປະຊາຊົນແຂວງສາລະວັນ ໄດ້ເປີດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄັ້ງທີ I ປະຈຳປີ 2023 ແລະ ທິດທາງແຜນການຄັ້ງທີ II ປະຈຳປີ 2024 ໂດຍການເປັນປະທານກອງປະຊຸມຂອງສະຫາຍ ນາງ ທອງໃບ ໄຊຍະສານ ເລຂາໜ່ວຍພັກ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ເຂົ້າຮ່ວມມີສະຫາຍ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ເລຂາຄະນະພັກຮາກຖານສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ; ມີຮອງເລຂາໜ່ວຍພັກຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ເລຂາໜ່ວຍພັກຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຮອງເລຂາໜ່ວຍພັກຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ພ້ອມດ້ວຍບັນດາສະມາຊິກພັກສົມບູນ-ສຳຮອງ ພາຍໃນໜ່ວຍ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຂອງພັກ ຄື: ຄຳສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ 01/ກມສພ, ລົງວັນທີ 3 ມັງກອນ 2018 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 291/ຄຈສພ, ລົງວັນທີ 26 ເມສາ 2018; ຄຳແນະນຳຂອງຄະນະກວດກາພັກແຂວງ ສະບັບເລກທີ 163/ຄກພຂ ລົງວັນທີ 26 ກັນຍາ 2018 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ແຈ້ງການແນະນຳຂອງຄະນະຈັດຕັ້ງແຂວງ ສະບັບເລກທີ 47/ຄຈຂ.ສວ ລົງວັນທີ 13 ຕຸລາ 2023 ກ່ຽວກັບແນະນຳເພີ່ມເຕີມບາງຂັ້ນຕອນຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ, ທັງນີ້ ເພື່ອເປັນແນວທາງປະຕິບັດຕາມຄຳແນະນຳຂໍ້ກຳນົດແຜນກໍ່ສ້າງໜ່ວຍພັກ, ໄປພ້ອມກັບການດຳເນີນການກວດກາຕີລາຄາໜ່ວຍພັກ ຜົນງານດ້ານດີ, ແກ້ໄຂຈຸດອ່ອນຂໍ້ຄົງຄ້າງ ແລະ ສິ່ງທ້າທາຍທົດສອບ ຮັບປະກັນໃຫ້ແຜນການກໍ່ສ້າງໜ່ວຍພັກມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ໃຫ້ມີທັງປະລິມານ ແລະ ຄຸນນະພາບ.

ຈາກນັ້ນ, ສະຫາຍ ນາງ ເຫວາ ສີລາດວງໃຈ ຮອງເລຂາໜ່ວຍພັກຄະນະກຳມະການວັດທະນະທຳສັງຄົມ ແລະ ບັນດາເຜົ່າ ໄດ້ຜ່ານຮ່າງບົດສະຫຼຸບການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄັ້ງທີ I ປະຈຳປີ 2023 ໂດຍລວມ ຍົກໃຫ້ເຫັນການເຄື່ອນໄຫວນຳພາ-ຊີ້ນຳວຽກງານແຕ່ລະດ້ານ ໃນປີ 2023 ຄະນະໜ່ວຍພັກ, ສະມາຊິກພັກ ເຊິ່ງໄດ້ເອົາໃຈໃສ່ເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານບັນລຸໄດ້ຕາມມາດຖານເງື່ອນໄຂທີ່ໜ່ວຍພັກໄດ້ຮັບຮອງຕາມແຜນການກໍ່ສ້າງ ແລະ ຜ່ານທິດທາງແຜນການປະຈຳປີ 2024; ພ້ອມດຽວກັນ, ບັນດາສະຫາຍພາຍໃນໜ່ວຍພັກ ໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນເຂົ້າໃສ່ຮ່າງບົດສະຫຼຸບ ເພື່ອໃຫ້ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນ ທັງໃຫ້ຄະນະໜ່ວຍພັກ ແລະ ສະມາຊິກພັກຜ່ານໃບສຳຫຼວດຕົນເອງ ຕີລາຄາຈຸດດີ-ຈຸດອ່ອນ ແລະ ຂໍ້ຄົງຄ້າງໃນໄລຍະຜ່ານມາ ພ້ອມໃຫ້ຄະແນນ.

ໃນທ້າຍພິທີ, ສະຫາຍ ນາງ ສູນໄຖ ໄຊຍະແສງ ໄດ້ມີຄຳເຫັນໂອ້ລົມຊີ້ທິດເຍືອງທາງ ເຊິ່ງສະຫາຍໄດ້ເນັ້ນໜັກໃຫ້ຄະນະໜ່ວຍພັກ ແລະ ສະມາຊິກພັກ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສືບຕໍ່ເອົາໃຈໃສ່ສຶກສາອົບຮົມດ້ານການເມືອງ-ແນວຄິດ, ການຈັດຕັ້ງ, ແບບແຜນວິທີນຳພາ ແລະ ການນຳພາປະຕິບັດໜ້າທີ່ການເມືອງ ກໍຄືດ້ານວິຊາສະເພາະ ແລະ ເຕົ້າໂຮມຄວາມສາມັກຄີຂອງບັນດາສະມາຊິກພັກ, ອີງການຈັດຕັ້ງມະຫາຊົນໃຫ້ມີຄວາມເປັນເອກະພາບສູງ, ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນຕໍ່ການນຳພາຂອງພັກ, ປະກອບສ່ວນຢ່າງຕັ້ງໜ້າໃນການຜັນຂະຫຍາຍ ແລະ ປະຕິບັດທິດທາງແຜນການທີ່ຄະນະໜ່ວຍພັກວາງອອກ ໃຫ້ມີຜົນສຳເລັດ ສາມາດຢັ້ງຢືນ ຮັບຮອງໃຫ້ກາຍເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

**(ດີລຳພົນ ພົມມະຈັນ)**



# ສະພາປະຊາຊົນແຂວງສະຫວັນນະເຂດສະຫຼຸບຕີລາຄາຜົນສຳເລັດການດຳເນີນກອງປະຊຸມສະໄໝສາມັນ

(ສພຊ) ເພື່ອຖອດຖອນບົດຮຽນ ແລະ ແລກປ່ຽນຄຳຄິດຄຳເຫັນໃນການຈັດຕັ້ງປະຕິບັດວຽກງານທີ່ຜ່ານມາພາຍໃນສະພາປະຊາຊົນແຂວງ ເມື່ອບໍ່ດົນມານີ້, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາຜົນສຳເລັດການກະກຽມ, ການດຳເນີນກອງປະຊຸມ ແລະ ສະຫຼຸບຕີລາຄາການລົງພົບປະ, ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໂດຍການເປັນປະທານກອງປະຊຸມຂອງທ່ານ ຄຳຜັນ ຄູນສະຫວັນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານຮອງປະທານຄະນະກຳມະການ ທີ່ປະຈຳການພາຍໃນສະພາປະຊາຊົນແຂວງ, ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.



ໂອກາດນີ້, ທ່ານ ພູທອນ ພຸດທະຂັນຕີ ເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານບົດສະຫຼຸບຜົນສຳເລັດການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ສະພາປະຊາຊົນແຂວງ ຊຸດທີ II; ຜ່ານບົດສະຫຼຸບຕີລາຄາການລົງພົບປະ, ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II. ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ເພື່ອເປີດໂອກາດໃຫ້ຜູ້ເຂົ້າຮ່ວມກອງປະຊຸມທັງໝົດແລກປ່ຽນຄຳຄິດຄຳເຫັນຕໍ່ກັບບັນດາບັນຫາທີ່ຍັງຄົງຂ້າງ ແລະ ຂອດທີ່ຄວນແກ້ໄຂຢ່າງເລັ່ງດ່ວນ.

ໃນຕອນທ້າຍ, ປະທານກອງປະຊຸມກໍໄດ້ສະຫຼຸບ, ຕີລາຄາ ພ້ອມທັງຍ້ອງຍໍຊົມເຊີຍຜົນສຳເລັດທີ່ທຸກພາກສ່ວນພາຍໃນສະພາປະຊາຊົນແຂວງ ໄດ້ຮ່ວມແຮງຮ່ວມໃຈສາມັກຄີໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນສຳເລັດຕາມແຜນທີ່ວາງໄວ້ ແລະ ມີທິດຊີ້ນຳໃຫ້ແຕ່ລະຄະນະກຳມະການກະກຽມບັນດາເນື້ອໃນເພື່ອປະກອບຄຳຄິດເຫັນໃສ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ໄດ້ໄຂຂຶ້ນໃນວັນທີ 31 ຕຸລາ 2023 ນີ້.



# ເຜີຍແຜ່ເອກະສານ ວັນປະກາດເອກະລາດ ຄົບຮອບ 78 ປີ




(ສພຊ) ໜ່ວຍພັກສະພາປະຊາຊົນແຂວງ ໄດ້ເຜີຍແຜ່ເອກະສານມູນເຊື້ອວັນປະກາດເອກະລາດ ຄົບຮອບ 78 ປີ (12 ຕຸລາ 1945-12 ຕຸລາ 2023) ໂດຍການເປັນປະທານຂອງສະຫາຍ ທອງຄານ ວັດສະດາກອນ ເລຂາໜ່ວຍພັກສະພາປະຊາຊົນແຂວງ, ມີສະຫາຍ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງອຸດົມໄຊ, ບັນດາສະຫາຍຄະນະພັກ, ສະມາຊິກພັກສົມບູນ-ສຳຮອງ ພາຍໃນໜ່ວຍພັກສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍເລຂາໜ່ວຍພັກ ໄດ້ເຜີຍແຜ່ເອກະສານມູນເຊື້ອວັນປະກາດເອກະລາດ ຄົບຮອບ 78 ປີ (12 ຕຸລາ 1945 -12 ຕຸລາ 2023) ເພື່ອເປັນການຈັດຕັ້ງປະຕິບັດຕາມແຈ້ງການຂອງຄະນະໂຄສະນາອົບຮົມແຂວງ ແລະ ເພື່ອທົບທວນຫວນຄືນມູນເຊື້ອວັນປະກາດເອກະລາດ ໃຫ້ສະມາຊິກພັກ, ພະນັກງານ ໃຫ້ຮັບຮູ້ເຂົ້າໃຈກ່ຽວກັບປະຫວັດສາດ, ມູນເຊື້ອຂອງບັນດາຜູ້ນຳແນວລາວຮັກຊາດ, ນັກຮົບ ແລະ ປະຊາຊົນລາວບັນດາເຜົ່າ ທີ່ອຸທິດເລືອດເນື້ອເຫື່ອແຮງເພື່ອປະເທດຊາດເພື່ອການປະຕິວັດປົດປ່ອຍຊາດ, ເພື່ອສະແດງຄວາມຮູ້ບຸນຄຸນຕໍ່ບັນດານັກຮົບທີ່ເສຍສະຫຼະຊີວິດ, ອຸທິດເລືອດເນື້ອເຫື່ອແຮງເຂົ້າໃນພາລະກິດປະຕິວັດ, ປຸກລະດົມໃຫ້ຄົນຮຸ່ນຫຼັງຮັບຮູ້, ຮໍ່າຮຽນເອົາຄຸນງາມຄວາມດີຂອງພວກເພິ່ນ ແລະ ເພື່ອປຸກລະດົມສະມາຊິກພັກ, ພະນັກງານໃຫ້ຮັກສາ ແລະ ເສີມຂະຫຍາຍມູນເຊື້ອຮັກຊາດ, ມູນເຊື້ອແຫ່ງຄວາມສາມັກຄີປອງດອງ, ມູນເຊື້ອແຫ່ງການສູ້ຮົບອາດຫານຂອງປວງຊົນລາວທັງຊາດພາຍໃຕ້ການນຳພາຂອງພັກ ແນໃສ່ສ້າງໃຫ້ມີທັດສະນະທີ່ຖືກຕ້ອງເປັນເອກະພາບພາຍໃນພັກ, ພາຍໃນສັງຄົມ ພ້ອມທັງຍົກສູງຄວາມສາມາດນຳພາ ແລະ ລັກສະນະນຳຫນ້າຂອງພັກ, ເພີ່ມທະວີມະຫາສາມັກຄີທົ່ວປວງຊົນລາວ.

ຫຼັງຈາກນັ້ນ, ຕາງໜ້າຄະນະພັກໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວນຳພາ-ຊີ້ນຳຂອງຄະນະໜ່ວຍພັກສະພາປະຊາຊົນແຂວງ ປະຈຳເດືອນຕຸລາ ແລະ ວາງທິດທາງແຜນການເດືອນພະຈິກ 2023 ພ້ອມທັງເປີດກ້ວາງໃຫ້ຜູ້ເຂົ້າຮ່ວມປະກອບຄຳຄິດຄຳເຫັນຕໍ່ເນື້ອໃນຂອງຮ່າງບົດສະຫຼຸບດັ່ງກ່າວຢ່າງກົງໄປກົງມາ, ຕຳນິສິ່ງຂ່າວເຊິ່ງກັນແລະກັນ, ຕີລາຄາຄືນໃນການນຳພາ-ຊີ້ນຳຂອງຄະນະໜ່ວຍພັກສະພາປະຊາຊົນແຂວງຜ່ານມາ, ເພື່ອເຫັນໄດ້ດ້ານດີ ຜົນງານ, ຂໍ້ຄົງຄ້າງ ແລະ ເພື່ອຊອກຫາວິທີທາງແກ້ໄຂໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ.




## ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

ຕໍ່ຈາກສະບັບກ່ອນ

9. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນຂອງຕົນ ໃນການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ;

10. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 63 ສິດ ແລະ ໜ້າທີ່ ຂອງຫ້ອງການພະລັງງານ ແລະ ບໍ່ແຮ່ຂັ້ນເມືອງ**

ໃນການຄຸ້ມຄອງວຽກງານຄວາມປອດໄພຂອງ ເຂື່ອນໄຟຟ້າ ແລະ ເຂື່ອນຫາງແຮ່ ຫ້ອງການພະລັງງານ ແລະ ບໍ່ແຮ່ຂັ້ນເມືອງ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍກ່ຽວກັບຄວາມປອດໄພຂອງເຂື່ອນ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

2. ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍກ່ຽວກັບຄວາມປອດໄພຂອງເຂື່ອນ;

3. ໃຫ້ຄຳແນະນຳ ໃນການຈັດຕັ້ງປະຕິບັດວຽກງານຄວາມປອດໄພຂອງເຂື່ອນ ທີ່ມີຄວາມສ່ຽງຕ່ຳ;

4. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນຂອງຕົນ ໃນການຄຸ້ມຄອງວຽກງານຄວາມປອດໄພຂອງເຂື່ອນ;

ອ່ານຕໍ່ສະບັບໜ້າ




## ກຳນົດໂຄຕາແຮງງານທົດແທນຈາກຕ່າງປະເທດ

ເລື່ອງນີ້ຖືເປັນຂ່າວດີສຳລັບແຮງງານຕ່າງປະເທດທີ່ຕ້ອງການເຂົ້າໄປເຮັດວຽກຢູ່ **ສ. ເກົາຫຼີ** ເພື່ອລາຍຮັບທີ່ດີກວ່າ, ເພາະວ່າຫວ່າງບໍ່ດົນມານີ້, ລັດຖະບານ ສ. ເກົາຫຼີ ໄດ້ກຳນົດໂຄຕາແຮງງານຕ່າງປະເທດທີ່ຕ້ອງການນຳເຂົ້າທົດແທນແຮງງານພາຍໃນທີ່ຫຼຸດໜ້ອຍຖອຍລົງຍ້ອນບັນຫາການເກີດໜ້ອຍ ແຕ່ຈຳນວນຜູ້ເຖົ້າພັດເພີ່ມຂຶ້ນຈົນຊິລົ້ນເມືອງ. ລາຍລະອຽດຂອງຂ່າວບອກວ່າ ທາງການຂອງ ສ. ເກົາຫຼີ ໄດ້ປະກາດແຜນເພີ່ມຈຳນວນໂຄຕາແຮງງານຕ່າງປະເທດທີ່ຈະນຳເຂົ້າໃນຕໍ່ໜ້າຫຼາຍກວ່າສອງເທົ່າຕົວ ເພື່ອສະໜອງໃຫ້ອຸດສະຫະກຳທີ່ເປັນຂໍກະແຈ ເຊັ່ນ: ຂະແໜງຜະລິດ, ຂະແໜງກະສິກຳ ແລະ ການບໍລິການ ໃຫ້ໄດ້ຕາມຈຳນວນທີ່ຕ້ອງການ. ເພື່ອເຮັດໃຫ້ແຜນນຳເຂົ້າແຮງງານຕ່າງປະເທດເກີດຜົນ, ທ່ານປະທານາທິບໍດີ ຢຸນສຸກໂຢນ ໄດ້ຮຽກຮ້ອງໃຫ້ມີການຈັດລະບຽບການຄືນໃໝ່ທັງໝົດ ກ່ຽວກັບການຈ້າງແຮງງານຕ່າງປະເທດ. ທາງເບື້ອງລັດຖະບານຈະເຮັດໜ້າທີ່ປັບປຸງລະບົບການອະນຸຍາດອອກແຮງງານ ເພື່ອແກ້ໄຂບັນຫາຂາດເຂີນທີ່ເຮັດໃຫ້ 213.000 ຕຳແໜ່ງງານວ່າງລົງ ຍ້ອນບັນຫາການເກີດຕ່ຳຫຼາຍ ອັນໄດ້ເຮັດໃຫ້ປະຊາກອນພາຍໃນປະເທດຫຼຸດລົງ.

ເວົ້າສະເພາະໄຕມາດທີ 4 ຂອງປີ 2023 ນີ້ ໃບອອກແຮງງານ ປະເພດ E-9 ສຳລັບຄົນຕ່າງປະເທດຈະເພີ່ມຂຶ້ນ 10:000 ຕຳແໜ່ງງານ, ສ່ວນຕະຫຼອດປີ 2024 ໂຄຕາແຮງງານຕ່າງປະເທດຈະເພີ່ມຂຶ້ນສູງເປັນຫວັດການຄືສູງເຖິງ 120.000 ຕຳແໜ່ງງານ ຫຼື ສູງກວ່ານັ້ນ. ລັດຖະບານຈະອະນຸຍາດໃຫ້ບັນດາບໍລິສັດສືບຕໍ່ວ່າຈ້າງ ແຮງງານຕ່າງປະເທດ ທີ່ມີຄວາມຊຳນານສູງ ໂດຍບໍ່ມີການຈຳກັດຈາກລະບຽບການວ່າດ້ວຍຄົນເຂົ້າເມືອງ ທັງນີ້ກໍເພື່ອໃຫ້ແຮງງານເຫຼົ່ານີ້ສາມາດເຮັດວຽກໄດ້ໃນໄລຍະຍາວ. ນອກຈາກນັ້ນ, ລັດຖະບານຍັງມີນະໂຍບາຍຝຶກອົບຮົມດ້ານວິຊາຊີບໃຫ້ພວກເຂົາອີກດ້ວຍ ແຮງງານດິບ ຫຼື ບໍ່ມີທັກສະ (ແຮງງານທີ່ໄດ້ຮັບວີຊາ E-9) ໃນເມື່ອກ່ອນ ສາມາດເຂົ້າໄປເຮັດວຽກຄືນ ຢູ່ ສ. ເກົາຫຼີ ເປັນເວລາ 4 ປີກັບ 10 ເດືອນ ນັ້ນ ຈະມີສິດຢູ່ເຮັດວຽກໄດ້ ເຖິງ 10 ປີ (ຕາມລະບຽບການໃໝ່). ທຸກໆລະບຽບການທີ່ຈຳກັດການນຳໃຊ້ແຮງງານຕ່າງປະເທດໂດຍຂະແໜງອຸດສະຫະກຳນັ້ນ ຈະໄດ້ຮັບການຜ່ອນຜັນ. ລະບົບການອະນຸຍາດອອກແຮງງານສຳລັບຄົນຕ່າງປະເທດ ຍັງຈະກວມເອົາຕຳແໜ່ງງານຈັດສົ່ງເອກະສານ, ວັດສະດຸ ແລະ ຕຳແໜ່ງງານໃນພາກພື້ນດິນປະຈຳສະໜາມບິນອີກດ້ວຍ (ໃນເມື່ອກ່ອນບໍ່ມີແຮງງານຕ່າງປະເທດໃນຕຳແໜ່ງງານນີ້) ຂ່າວຍັງໄດ້ຮູ້ຕື່ມອີກວ່າ **ຍີປຸ່ນ** ກໍມີບັນຫາຂາດແຄນແຮງງານເຊັ່ນດຽວກັນ ແລະ ກໍດ້ວຍເຫດຜົນດຽວກັນອ້ອຍຕ້ອຍ ຄືຍ້ອນການເກີດຂອງເດັກຫຼຸດລົງໄປພ້ອມໆກັບຈຳນວນຜູ້ເຖົ້າເພີ່ມຂຶ້ນ. ໃນປັດຈຸບັນມີຈຳນວນ 86% ຂອງບັນດາຕົວເມືອງທັງໝົດໃນຍີ່ປຸ່ນ ທີ່ຕ້ອງການແຮງງານຕ່າງ ປະເທດເພີ່ມຂຶ້ນ (ແຫຼ່ງຂ່າວ Vientiane Times 18/9/2023). ພາກສ່ວນທີ່ຂາດແຄນແຮງງານຕ່າງປະເທດຫຼາຍທີ່ສຸດນັ້ນ ໄດ້ແກ່ຂະແໜງກະສິກຳ ແລະ ບັນດາຂະແໜງການທີ່ສຳຄັນຢູ່ຕາມທ້ອງຖິ່ນ. ສຳນັກງານຂ່າວ ກຽວໂຕ ທີ່ເປັນເຈົ້າການສຳຫຼວດເລື່ອງນີ້ໃນ 47 ເທສະບານ ແລະ ນະຄອນ ໄດ້ພົບວ່າ 84% ຂອງບັນດາຫົວໜ້າອົງການປົກຄອງ ໄດ້ສະແດງຄວາມເປັນຫ່ວງຢ່າງເລິກເຊິ່ງ ກ່ຽວກັບຄວາມສ່ຽງ ທີ່ເຂດປົກຄອງຂອງພວກເພິ່ນຈະສາບສູນໄປ ຖ້າບໍ່ມີການຕອບສະໜອງແຮງງານຈາກຕ່າງປະເທດຢ່າງພຽງພໍ ແລະ ທັນການ. ນີ້ຖືເປັນຂ່າວດີສຳລັບແຮງງານລາວທີ່ມີປະສົງຢາກໄປເຮັດວຽກຢູ່ ສ. ເກົາຫຼີ ແລະ ຍີ່ປຸ່ນ ແຕ່ກໍຕ້ອງມີການກະກຽມພ້ອມດ້ານທັກສະທາງອາຊີບ ເຖິງແມ່ນວ່າແຮງງານດິບຍັງເປັນທີ່ຕ້ອງການຂອງ ສ. ເກົາຫຼີ (ແຮງງານວີຊາ E-9) ກໍຕາມ, ຖ້າເຮົາມີທັກສະມີຄວາມຊຳນານງານ ເງື່ອນໄຂຕໍ່ລອງຂອງເຮົາກໍຈະສູງຂຶ້ນ.

## ສັງຄົມສ່ອງແສງ...

(ຕໍ່ຈາກໜ້າ 1)

ຕັ້ງໜ້າເອົາໃຈໃສ່ ແຕ່ກໍຍັງເຫັນວ່າສະພາບການດັ່ງກ່າວ ຍັງບໍ່ທັນແກ້ໄຂໃຫ້ຫຼຸດລົງໄດ້ເທື່ອ ສະພາບການຜັນຜວນຂອງເງິນຕາອັດຕາແລກປ່ຽນສິນຄ້າລາຄາແພງອື່ນໆ ກໍຍັງຢູ່ສະພາບເດີມ ຫຼື ວ່າເພີ່ມຂຶ້ນຢູ່ ສະນັ້ນ, ຕໍ່ກັບບັນຫາດັ່ງກ່າວ ສະເໜີໃຫ້ເອົາໃຈໃສ່ເພີ່ມທະວີການນຳໃຊ້ກົດໝາຍ ລະບຽບການຕ່າງໆ ທີ່ລັດຖະບານໄດ້ວາງແລ້ວນັ້ນໃຫ້ມີຄວາມເຂັ້ມງວດຂຶ້ນກ່ວາເກົ່າ ໂດຍສະເພາະກົງຈັກການຈັດຕັ້ງທີ່ເຮັດໜ້າທີ່ໃນການຄຸ້ມຄອງການເງິນ ຄຸ້ມຄອງລາຄາສິນຄ້າ ຢາກໃຫ້ກວດກາເບິ່ງຄືນຄວາມຮັບຜິດຊອບທາງດ້ານການເມືອງ ຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດຕໍ່ໜ້າທີ່ການຈັດຕັ້ງທີ່ໄດ້ມອບໝາຍ ຖ້າພວກເຮົາບໍ່ເອົາໃຈໃສ່ແນວນີ້ ເຖິງແມ່ນວ່າຈະມີກົດໝາຍ ເຖິງແມ່ນວ່າຈະມີມະຕິ, ຄຳສັ່ງ ດີປານໃດກໍຕາມ ແຕ່ຜູ້ຈັດຕັ້ງປະຕິບັດແມ່ນຊັບພະຍາກອນມະນຸດຂອງພວກເຮົາ ແມ່ນບຸກຄະລາກອນຂອງພວກເຮົາ ແມ່ນພໍ່ຄ້າຊາວຂາຍຂອງພວກເຮົາ ສະນັ້ນ, ສັງເກດ ແລະ ໄດ້ເຫັນວ່າສິນຄ້າຕ່າງໆ ຢູ່ໃນຫ້າງຮ້ານ ລ້ວນແຕ່ໄດ້ຮຽກເປັນເງິນຕາ ອັນນີ້ບໍ່ມີຫຍັງປ່ຽນແປງ ພວກເຮົາໄປຊື້ສິນຄ້າດ້ານວັດຖຸກໍ່ສ້າງ ກໍຍັງຮຽກເປັນເງິນຕາຄືເກົ່າ ແລະ ອັດຕາແລກປ່ຽນນີ້ ທຽບທາງນອກ ພຽງແຕ່ຈັບໂທລະສັບມາອາໂຫຼ ມື້ນີ້ອັດຕາແລກປ່ຽນທໍ່ໃດ ກໍເວົ້າໄປຕາມນັ້ນໂລດ ສະນັ້ນ, ຊິເຮັດແນວໃດ ເພື່ອແກ້ບັນຫາດັ່ງກ່າວ ບັນດາກະຊວງການກ່ຽວຂ້ອງນີ້ ທະນາຄານ, ກະຊວງອຸດສາຫະກຳການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງທົບທວນເບິ່ງຄືນວ່າມາດຕະການນີ້ ພວກເຮົາເຮັດແນວນີ້ໄດ້ແລ້ວບໍ່ ຄັນບໍ່ໄດ້ ກໍຄວນຈະມີການເຂັ້ມງວດ ມີການເພີ່ມທະວີ ຢາກຈະສະເໜີຕໍ່ລັດຖະບານຕື່ມ ເຊິ່ງຢູ່ໃນນີ້ບັນດາສິນຄ້າຕ່າງໆ ທີ່ຕ່າງປະເທດລົງທຶນຢູ່ໃນລາວກໍຄືກັນ ກໍຍັງຮຽກເກັບເປັນເງິນຕາຢູ່ ສະນັ້ນ, ອັນນີ້ຂໍໃຫ້ເອົາໃຈໃສ່.

ຕໍ່ກັບການຊຸກຍູ້ກະຕຸ້ນການລົງທຶນ ບັນຫາຂອງພວກເຮົາ ທີ່ຫຍຸ້ງຍາກກວ່າໝູ່ ແມ່ນໝູ່ບໍ່ມາລົງທຶນ ບັນຫາພື້ນຖານໂຄງລ່າງຕົ້ນຕໍ ແມ່ນເສັ້ນທາງຄົມມະນາຄົມ ເຊິ່ງຜ່ານການແລກປ່ຽນພົບປະກັບທຸລະກິດຫຼາຍໆທ່ານ ເຂົາເຈົ້າກໍສ່ອງແສງທັງພາຍໃນ ແລະ ຕ່າງປະເທດກໍສ່ອງແສງບັນຫາຫຍຸ້ງຍາກກ່ວາໝູ່ລະແມ່ນສິ່ງເອື້ອອຳນວຍຄວາມສະດວກ ກໍແມ່ນເສັ້ນທາງຄົມມະນາຄົມພວກເຮົາຫຍຸ້ງຍາກແທ້ ສະນັ້ນ, ກໍຂໍໃຫ້ລັດຖະບານ ກໍຄື ກະຊວງໂຍທາທິການ ແລະ ຂົນສົ່ງຄວນມີການປະຕິຮູບການສ້າງທາງໃນຮູບແບບເດີມໆທີ່ພວກເຮົາສ້າງມານີ້ ເຊິ່ງສ້າງໄປແລ້ວຮອດລະດູຝົນມາກໍເປ່ເພ ລວມທັງການຄຸ້ມຄອງນ້ຳໜັກກໍຄືກັນ, ພວກເຮົາເວົ້າກັນໃນສະພານີ້ ກໍເວົ້າກັນຕະຫຼອດມາ ແຕ່ວ່າການຄຸ້ມຄອງນ້ຳໜັກ ມາຮອດຊູ່ມື້ນີ້ກໍຍັງເຫັນວ່າບັນດາສະຫາຍສະມາຊິກສະພາແຕ່ລະເຂດ ກໍຍັງສ່ອງແສງມາ ແລະ ຍັງບໍ່ສາມາດຄຸ້ມຄອງໄດ້; ສະນັ້ນ, ຂ້າພະເຈົ້າຢາກສະເໜີມາດຕະການໃນການຄຸ້ມຄອງນ້ຳໜັກ ຢາກໃຫ້ເປັນຄວາມຮັບຜິດຊອບຂອງໂຊເຟີລົດ, ຄັນຄຸມໂຊເຟີລົດໄດ້ ຂ້າພະເຈົ້າຄິດວ່າເຂົາບໍ່ກ້າເອົາຂຶ້ນເກີນນ້ຳໜັກດອກ ຄັນວ່າຜູ້ໃດນ້ຳໜັກເກີນ ລະແມ່ນປັບໃໝໂຊເຟີລົດຫັ້ນ ຢ່າໄປສັ່ງອັນນັ້ນອັນນີ້ ອັນທີ່ຢາກເວົ້ານີ້ ເຂົາເອົາເງິນໃຫ້ກໍເອົາໃດເອົາລະປ່ອຍໄປໄດ້ອັນນີ້ຈິງໃຈ ເວົ້າແລກປ່ຽນກັນໃດ ແລະ ບັນຫາກ່ຽວກັບການກໍ່ສ້າງຄວາມຈິງປະເທດລາວເຮົາ ມີນັກລົງທຶນສ້າງເຂື່ອນ, ສ້າງແບກອັບ, ສ້າງໂປຼເຈກ ຫຼື ວ່າຈຳນວນນີ້ຫຼາຍ ຖ້າຫາກພວກເຮົາຄຸມໄດ້ລະດັບການຄຸ້ມຄອງ ຂ້າພະເຈົ້າຄິດວ່າການກະຕຸ້ນເສດຖະກິດຂອງພວກເຮົາ ໜ້າຈະໄປໄດ້ດີກວ່ານີ້ ແຕ່ກົງກັນຂ້າມພວກເຮົາລົງທຶນໄປທໍ່ໃດ ກໍແມ່ນການກະຕຸ້ນໃຫ້ປະເທດທີ່ມີວັດສະດຸກໍ່ສ້າງຫັ້ນເພີ່ມຂຶ້ນທໍ່ນັ້ນ ພວກເຮົາໄດ້ແຕ່ໜ້ອຍດຽວ ອາຫານການກິນແມ່ນແຕ່ອາຫານການກິນກໍເອົາມາ, ວັດສະດຸກໍ່ສ້າງເພິ່ນກໍເອົາມາ, ແຮງງານເພິ່ນກໍເອົາມາ ທຸກຢ່າງເພິ່ນເອົາມາ ຄົນລາວເຮົາໄດ້ຫຍັງແດ່ ອັນນີ້ຢາກໃຫ້ຄົ້ນຄວ້າເບິ່ງຄືນພວກເຮົາຊິປະຕິຮູບແນວໃດກັບການລົງທຶນນີ້ ລວມທັງການທ່ອງທ່ຽວກໍຄືກັນ ພວກເຮົາຢາກດຶງດູດການທ່ອງທ່ຽວ ແຕ່ວ່າວິທີເອົາເງິນບໍ່ມີ ເອົາເຂົ້າມາທ່ອງທ່ຽວລ້າ ບາງເທື່ອເພິ່ນກໍຖືເອົາຂອງກິນມາພ້ອມອີກ; ສະນັ້ນ, ຫຼາຍຈຸດ ທີ່ຂ້າພະເຈົ້າຢາກສະເໜີວ່າພວກເຮົາຄວນລິເລີ່ມວ່າຈະຕ້ອງໄດ້ສ້າງພື້ນຖານໂຄງລ່າງໂດຍສະເພາະວັດສະດຸຕ່າງໆໃຫ້ມີການຜະລິດ ດຽວນີ້ຕິດພັນກັບອັນນີ້ ແຮ່ທາດພວກເຮົາຂຸດຄົ້ນແຮ່ເຫຼັກ ແຮ່ຫຍັງບັກຫຼາຍໆ ເຊິ່ງສະມາຊິກສະພາແຫ່ງຊາດຫຼາຍທ່ານກໍໄດ້ສະເໜີໃຫ້ເຫັນແລ້ວ ຄວນມີການຫັນມາປຸງແຕ່ງ ເປັນວັດສະດຸກໍ່ສ້າງ ຮັບໃຊ້ພາຍໃນຕ່າງໆໃຫ້ດີຂຶ້ນກ່ວາເກົ່າ ສະນັ້ນ, ຖ້າພວກເຮົາຍັງສົ່ງອອກແນວນີ້ ກໍຈະເປັນແນວນີ້ຕະຫຼອດແລະຜ່ານມານີ້ ພວກເຮົາມີການສົ່ງອອກເລື່ອງໄມ້ພວກເຮົາກໍມີການຮັດກຸມປະຕິບັດໄດ້ຄຳສັ່ງເລກ 15 ຂອງນາຍົກລັດຖະມົນຕີເຂັ້ມງວດ ສະນັ້ນ, ບົດຮຽນອັນເກົ່າເຮົາກໍມີລະເດ ຂ້າພະເຈົ້າຢາກຈະສະເໜີຄືແນວນັ້ນ.

**ຮຽງຮຽງໂດຍ:**
**ກົງໃຈ ແສງອຳພັນ**




# ຮັກສາໃຈຍາມເຈັບໄຂ້

# ດົ້ນກິບເມກ



ຄວາມຈິງແລ້ວ ການຮັກສາກາຍ ແລະ ໃຈນັ້ນ ບໍ່ຈຳເປັນຕ້ອງເອົາໃຈໃສ່ແຕ່ຍາມເຈັບໄຂ້ທໍ່ນັ້ນ ແຕ່ຍາມປົກກະຕິ ຊີວິດຍັງແຂງແຮງ ກໍຕ້ອງຮັກສາ, ພຸດທະສາສະໜາຖືວ່າ ສິ່ງທີ່ຮັກສາເບິ່ງແຍງໄດ້ຍາກນັ້ນຄື: ໃຈຂອງເຮົານີ້ເອງ ເພາະເວລາມັນໄປກະທົບໃສ່ເຫດການທີ່ບໍ່ມັກ ເຫດການຊຸ້ງຊັ້ງກໍຈະເຮັດໃຫ້ຈິດໃຈຮູ້ສຶກບໍ່ດີຂຶ້ນມາທັນທີ, ຮ່າງກາຍ ແລະ ຈິດໃຈເປັນຂອງຄູ່ກັນ, ຈິດເປັນນາຍ ກາຍເປັນບ່າວຮັບໃຊ້.

ການຮັກສາໃຈນັ້ນ ຕ້ອງຮັກສາດ້ວຍສະຕິ ກຳນົດໃຫ້ຮູ້ພາວະທີ່ຕົນເປັນຢູ່ເຊັ່ນ: ເວລາຮ່າງກາຍເຮົາເຈັບປ່ວຍໄຂ້ ຕ້ອງໄດ້ໃຊ້ສະຕິກຳນົດບໍ່ໃຫ້ຈິດປຸງແຕ່ງເພພັງໄປກັບອາການຂອງຮ່າງກາຍທີ່ເຈັບປ່ວຍ ຮ່າງກາຍເປັນໜ້າທີ່ຂອງທ່ານໝໍຮັກສາ ແຕ່ຈິດໃຈຢູ່ໃນຮ່າງກາຍຂອງເຮົາເອງ ເຮົາຈຶ່ງຕ້ອງຮູ້ກຳນົດຈິດໃຫ້ຖືກຕ້ອງ, ບູຮານກ່າວສອນໄວ້ວ່າ ຈິດເປັນນາຍ ກາຍເປັນບ່າວ ຮ່າງກາຍຮັບໃຊ້ຈິດໃຈ, ໃຈເປັນແກນຫຼັກຂອງຊີວິດ; ຖ້າເຮົາສາມາດຮັກສາຈິດໃຈໄວ້ຖືກຕ້ອງແລ້ວ ກໍເທົ່າກັບວ່າເຮົາໄດ້ຮັກສາຊັບປະເສີດຂອງຊີວິດໄດ້, ຄູບາອາຈານສອນວ່າ: ສະຕິປຽບຄືເຊືອກທີ່ຈະຕ້ອງເອົາຜູກຈິດໃຈໄວ້ບໍ່ໃຫ້ມັນດີ້ນຮົນໄປທາງບໍ່ດີບໍ່ຖືກຕ້ອງ ເພາະຈິດຄົນເຮົາມັນປຸງແຕ່ງວຸ້ນວາຍໄປຕາມອາລົມຕ່າງໆ ຄືກັບລີງທີ່ໂດດເຕັ້ນໄປມາ ຕ້ອງເອົາສະຕິຜູກຈິດໄວ້ໃຫ້ດີໆ.

ປະເດັນຕໍ່ມາ ການຮັກສາຈິດບໍ່ໃຫ້ປຸງແຕ່ງ ຕ້ອງມີສະຕິຢູ່ກັບອາລົມທີ່ດີງາມຕາມຫຼັກສິນທຳ ຈຶ່ງເປັນການບໍ່ປ່ອຍຈິດໄປກັງວົນກັບຄວາມນຶກຄິດທັງຫຼາຍ ທີ່ດຶງໃຈເຮົາຕົກຕ່ຳ ຢ່າລືມວ່າຄົນໃດທີ່ເຝິກຈິດໃຈເປັນສະມາທິ ໃຈຂອງຜູ້ນັ້ນ ຈະຜ່ອງໃສ ມີກຳລັງ ມີສະມາທິແນ່ວແນ່ໝັ້ນຄົງ ທີ່ຄອຍສົ່ງເສີມພະລັງໃຫ້ຮ່າງກາຍປະຕິບັດຕາມຈິດໃຈສັ່ງການຢ່າງຖືກຕ້ອງ.

ຜູ້ຂຽນຄິດວ່າ ປັດຈຸບັນສະພາບເສດຖະກິດຝືດເຄືອງ ເຮົາຕ້ອງຕັ້ງສະຕິປັນຍາ ກຳນົດຈັງຫວະຊີວິດ ປະຄອງຊີວິດໃຫ້ມີຫຼັກ ເຖິງວ່າເຮືອລີງແກ້ງ ຖ້າຮູ້ຈັກປະຄອງໄດ້ ເຮືອຊີວິດຈະບໍ່ຫຼົ້ມກາງວັງ!

# ປະເພນີບຸນຄູນລານ (ບຸນກອງເຂົ້າ)

ໂດຍ: ທິດຕາ

ຄຳວ່າ " ລານ" ແປວ່າເດີ່ນ ຫຼື ບ່ອນທີ່ຮາບພຽງດີ ເຊິ່ງເພິ່ນເອົາເຂົ້າມາກອງໄວ້; ກ່ອນຮອດລະດູກ່ຽວເຂົ້າ ຊາວໄຮ່ນາພາກັນເຮັດລານເຂົ້າໄວ້ລ່ວງໜ້າ ແປງດິນຂອງລານເຂົ້າໃຫ້ຮາບພຽງ ບາງຄົນກໍເອົາຂີ້ຕົມທາໃຫ້ກ້ຽງ ແລ້ວຕາກແດດຈົນພື້ນທີ່ຂອງລານເຂົ້ານັ້ນແຫ້ງ ຫຼັງຈາກກ່ຽວເຂົ້າຕາກໄວ້ກັບຕໍເຟືອງປະມານສອງຫາສາມມື້ ເຫັນວ່າເຂົ້າແຫ້ງດີແລ້ວ ກໍເອົາເຂົ້າມາໄວ້ລານເຂົ້າ ເພື່ອຟາດເອົາເຂົ້າເປືອກ ກອງໃສ່ໃນລານ ກ່ອນທີ່ຈະຂົນເອົາເຂົ້າເປືອກມາໃສ່ເລົ້າໃສ່ສາງ ກໍຈັດງານບຸນຄູນເຂົ້າຕາມປະເພນີ.

ການເຮັດບຸນຄູນເຂົ້ານີ້ ກໍແມ່ນພິທີລ້ຽງຜີໄຮ່-ນາ ທີ່ຖືວ່າເປັນເທວະດາຮັກສາໄຮ່ນາ-ຮົ້ວສວນໃຫ້ເຮົານັ້ນເອງ; ພິທີລ້ຽງຢ່າງນ້ອຍກໍມີການຂ້າໄກ່, ເຫຼົ້າຢາ, ປາແປ້ງ, ເຂົ້າດຳ, ເຂົ້າແດງ, ເຄື່ອງຄາວຂອງຫວານ, ສານຕາແຫຼວ, ປັກໃສ່ສີ່ແຈ, ລານເຂົ້າເຮັດກະທົງ 9 ຫ້ອງສຳລັບໃສ່ອາຫານລ້ຽງເທວະດາ ຫຼື ຜີໄຮ່-ນາ ມີດອກໄມ້ທູບທຽນບູຊາ, ກວານຈ້ຳຈະເປັນຜູ້ເຮັດໜ້າທີ່ອັນເຊີນເທວະດາທີ່ຮັກສາໄຮ່-ນາຮົ້ວສວນນັ້ນມາກິນຈາກກະທົງ; ຊາວໄຮ່ນາບາງຄອບຄົວກໍທຳພິທີບຸນຄູນເຂົ້າຢູ່ເຮືອນ ນິມົນພະສົງມາສັນເຂົ້າ ແລະ ສູດປະຣິຕະມຸງຄຸນ ເພື່ອຮັບເອົາຂວັນເຂົ້າມາສູ່ເລົ້າສູ່ເຍຍ ເພື່ອໃຫ້ເຂົ້າໄຮ່ເຂົ້ານາໃນລະດູເກັບກ່ຽວຕໍ່ໆໄປ ໃຫ້ມີໝາກຜົນທະວີຍິ່ງໆຂຶ້ນ ເຊິ່ງມີຄຳກອນບູຮານ ກ່ຽວກັບບຸນຄູນເຂົ້າຕອນໜຶ່ງ ກ່າວໄວ້ ດັ່ງນີ້:

ຮີດໜຶ່ງນັ້ນ ພໍເມື່ອເດືອນຍີ່ຍ້າຍ ເຂົ້າເຂດລະດູໜາວ
ເຫມັນວາໂຍພັດ ເຍືອກເຢັນກາຍເນື້ອ
ລາວມີບຸນຄູນເຂົ້າ ຫຼັງລະດູການເກັບກ່ຽວ
ຟາດເຂົ້າເປືອກກອງໃສ່ໄວ້ ລານກ້ວາງໄຮ່ນາ
ມີການບູຊາເຈົ້າ ອາລັກຂານາໄຮ່
ປັກຕາແຫຼວສີ່ດ້ານ ລານເຂົ້າຮາບພຽງ
ກວານຈ້ຳອັງເຊີນເຈົ້າ ເທວະດາເຈົ້າຖິ່ນ
ຜີໄຮ່ນາພໍ່ພ້ອມ ເຊີນເຈົ້າພໍ່າສະເຫວີຍ
ມີຂອງຫວານຄາວພ້ອມ ທັງສຸລາແກ້ວໃຫຍ່
ຂ້າໄກ່ຄົບເຄື່ອງຫ້າງ ວາງໄວ້ຂອບນາ
ຂົນເຂົ້ານາມາໄວ້ ໃນເຮືອນລົ້ນໄຖ່
ຂົນເຂົ້າໄຮ່ມາໃສ່ເລົ້າ ຄູນເຂົ້າໃສ່ສາງ
ມວນບ່າວສາວໜຸ່ມນ້ອຍ ອອກປ່າພະນາເຂົາ
ຊອກຫາຫຼົວຫາຟືນ ຊູ່ເຮືອນກຽມໄວ້
ບໍ່ໄດ້ໄລລາປົ້ນ ປະເພນີລາວແຕ່ເກົ່າ
ໃຫ້ເຮົາໄດ້ສືບສ້າງ ກະທຳແທ້ແຕ່ປູ່ຍານັ້ນແລ້ວ.

ນອກຈາກ ບຸນຄູນເຂົ້າ ຫຼື ບຸນກອງເຂົ້ານີ້ແລ້ວ ສະໄໝກ່ອນຊາວບ້ານຈະພາກັນໄປຊອກຫຼົວ (ຟືນ) ກາງປ່າມາໄວ້ດັງເພາະເປັນຍາມໜາວອາກາດແຫ້ງ.



# ຂຽນຄຳລາວໃຫ້ຖືກ

#ຄູແສງ

ໃນເວລາຂຽນຄຳສັບທີ່ມີພະຍາງທີ່ປະກອບດ້ວຍພະຍັນຊະນະ ຮ, ແຕ່ເວລາເວົ້າບາງເທື່ອເຮົາກໍມັກອອກເປັນສຽງພະຍັນຊະນະ ລ. ເມື່ອອອກເປັນສຽງ ລ ເລື້ອຍໆ ກໍມັກເຮັດໃຫ້ເວລາເຮົາຂຽນກໍຂຽນເປັນ ລ ເຊັ່ນກັນ ເຊິ່ງພາໃຫ້ເກີດສະກົດຄຳຜິດ ດັ່ງຕົວຢ່າງລຸ່ມນີ້:

| ຄຳຖືກ | ຄຳຜິດ |
|---|---|
| ກະທັດຮັດ | ~~ກະທັດລັດ~~ |
| ຄັ້ງແຮກ | ~~ຄັ້ງແລກ~~ |
| ສາຍຮຸ້ງ | ~~ສາຍລຸ້ງ~~ |
| ທະຫານຮາບ | ~~ທະຫານລາບ~~ |
| ບູຮານ | ~~ບູລານ~~ |
| ຮັບຮອງ | ~~ລັບລອງ~~ |
| ຮຸກຮານ | ~~ລຸກລານ~~ |
| ຮ້ອຍ | ~~ລ້ອຍ~~ |




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**7. ຂໍ້ບົກພ່ອງຜິດພາດນັ້ນມັນເກີດມາຈາກໃສ?**

ພັກເຮົາ ຕ້ອງເປັນພັກໃຫຍ່ ປະກອບດ້ວຍທຸກຊົນຊັ້ນໃນສັງຄົມ. ເພາະສະນັ້ນ ຈຶ່ງມີລັກສະນະແນວຄິດສັດຊື່ບໍລິສຸດ ເດັດດ່ຽວ ແລະ ໃຫຍ່ຫຼວງ. ແຕ່ກໍບໍ່ຫຼີກເວັ້ນໄດ້ຊຶ່ງປະເພນີນິດໄສ ແລະ ຂໍ້ບົກພ່ອງຂອງສັງຄົມພາຍນອກ ທີ່ແຜ່ຜາຍຕິດແປດ ແລະ ເຊື່ອມຊຶມເຂົ້າມາໃນພັກຢູ່ເລື້ອຍໆ. ແຕ່ກໍບໍ່ແມ່ນວ່າເຫັນເປັນແນວນັ້ນ ພວກເຮົາຈະຢ້ານກົວ. ພວກເຮົາເຫັນແຈ້ງເຖິງພະຍາດນັ້ນແລ້ວ ພວກເຮົາຕ້ອງແກ້ໄຂປ່ຽນແປງ ແລະ ຊອກຫາວິທີດັດແປງມັນໃຫ້ໄດ້.

ພະນັກງານແຕ່ລະຄົນ, ສະມາຊິກແຕ່ລະຄົນຂອງພັກ ຕ້ອງຈິງໃຈກວດກາເບິ່ງຕົນເອງ ແລະ ກວດເບິ່ງເພື່ອນສະຫາຍໃຫ້ແກ້ໄຂຈົນໄດ້. ຕຳລາຢາແກ້ທີ່ດີກວ່າໝູ່ໝົດ ແມ່ນ ການຕຳໜິຕົນເອງ ແລະ ຕຳໜິກັນ

ນ້ຳຕົກໃສ່ຫີນຍັງຮູ້ຫ້ຽນ, ເຫຼັກຝົນເທິງກໍ່ຍັງຮູ້ຄົມ. ພວກເຮົາອົດທົນແກ້ໄຂປ່ຽນແປງເທິງຂໍ້ບົກພ່ອງນັບມື້ຈະເບົາບາງລົງ, ຂໍ້ດີນັບມື້ຈະຫຼາຍຂຶ້ນ, ພະນັກງານ ແລະ ສະມາຊິກຂອງພັກ ນັບມື້ນັບຈະກາຍເປັນນັກປະຕິວັດທີ່ເດັດຂາດ, ພັກຈະນັບມື້ນັບຂະຫຍາຍກວ້າງອອກ. ດັ່ງນັ້ນ ຈຶ່ງຫວັງວ່າທຸກຄົນຈະແກ້ໄຂປ່ຽນແປງຕົນເອງຢ່າງແທ້ຈິງ.

**4. <u>ແກ້ໄຂ:</u>**

ພັກຂອງພວກເຮົາ ເປັນການຈັດຕັ້ງອັນໜຶ່ງທີ່ກ້າວໜ້າທີ່ສຸດ ໄດ້ມີຜົນງານອັນງົດງາມມາແລ້ວ.

ຢູ່ໃນພັກຂອງພວກເຮົາ ມີຄົນຈຳນວນຫຼາຍ ທີ່ເປັນຜູ້ມີຄວາມສາມາດ, ມີຄຸນສົມບັດ ແລະ ສ່ວນຫຼາຍກໍເປັນຄົນຜູ້ຫ້າວຫັນກວ່າໝູ່ ສະຫຼາດສະຫຼຽວກວ່າໝູ່ ຮັກຊາດກວ່າໝູ່ ເດັດດ່ຽວ ແລະ ກ້າຫານກວ່າໝູ່, ດັ່ງນັ້ນ ແນວໃດພວກເຮົາກໍຈະໄປເຖິງໄຊຊະນະ ແລະ ສຳເລັດຜົນຢ່າງແນ່ນອນ.

ເຖິງຢ່າງນັ້ນກໍຕາມ, ກໍບໍ່ແມ່ນວ່າໝົດທຸກຄົນຈະດີໝົດ, ບໍ່ແມ່ນວ່າວຽກການທີ່ເຮັດມາອັນໃດກໍຈະດີໝົດ ພາຍໃນພັກຂອງພວກເຮົາ ກໍຍັງມີຄົນຜູ້ໂລເລເຮັດສິ່ງທີ່ບໍ່ສົມຄວນຄືດັ່ງເວົ້າມາເທິງນີ້.

ອ່ານຕໍ່ສະບັບໜ້າ...



## ສຸກສະບາຍທາຍໂລດາ

# ຜົມຫງອກກ່ອນໄວ

**ໂດຍ: ສາວແອ່ວ**



ໃນຄໍລໍາສຸສະບາຍທາຍໂລດາສະບັບນີ້, ເຮົາມີສານອາຫານ 4 ຊະນິດ ທີ່ຢາກນໍາສະເໜີແກ່ທ່ານ ເພື່ອຊ່ວຍບັນເທົາບັນຫາຜົມຂາວກ່ອນໄວອັນຄວນ ເພາະຜົມຫງອກ ຫຼື ຜົມຂາວ ຖ້າມັນເກີດຂຶ້ນຕອນເຖົ້າ ຍັງສາມາດເຂົ້າໃຈໄດ້ວ່າມັນເປັນເລື່ອງທໍາມະຊາດ ແຕ່ຖ້າມີຜົມຫງອກເກີດໃນເວລາທີ່ພວກເຮົາອາຍຸບໍ່ຫຼາຍ ອັນນີ້ອາດຈະຖືວ່າຜິດປົກກະຕິ ສ່ວນຫຼາຍມັກຈະແກ້ໄຂບັນຫານີ້ດ້ວຍການຍ້ອມຜົມກໍສາມາດຊ່ວຍໄດ້ ແຕ່ທ່ານຮູ້ບໍວ່າ ການກິນອາຫານກໍສາມາດຊ່ວຍທ່ານໄດ້ ເນື່ອງຈາກວ່າອາຫານບາງຊະນິດ ມີຄຸນສົມບັດຊ່ວຍບໍາລຸງຜົມ, ເລັບ ແລະ ຜິວໜັງ ຂອງພວກເຮົາໄດ້ຢ່າງມີປະສິດທິພາບ; ຖ້າທ່ານເປັນຄົນໜຶ່ງທີ່ຕ້ອງປະສົບກັບບັນຫາຜົມຂາວກ່ອນໄວ ຄວນເນັ້ນການກິນອາຫານ ດັ່ງນີ້:

- ອາຫານທະເລ, ແລະ ແກ່ນດອກຕາເວັນ ເພາະທອງແດງ ເປັນແຮ່ທາດສໍາຄັນໃນຂະບວນການສ້າງເມັດສີເມລານິນ ເຊິ່ງເປັນສານສໍາຄັນໃນການສ້າງສີຜົມ ມັກພົບເຫັນຢູ່ໃນຫອຍນາງລົມ ແຕ່ຄວນລະມັດລະວັງ ຄໍແລັດເຕີຣໍ ຫາກກິນຫອຍນາງລົມ ແລະ ອາຫານທະເລ ຫຼາຍເກີນໄປ.

- ຫົວກາລິດ, ໝາກອຶແລະ ຖົ່ວປະເພດຕ່າງໆເພາະທາດອາຊິດໂຟລິກ ຊ່ວຍເຮັດໃຫ້ຜົມບໍ່ຫງອກໄວ ແລະ ມັກມີຢູ່ໃນຜັກໃບຂຽວເຂັ້ມ.

- ເຂົ້າກ່ອງ, ເຂົ້າໂອດ, ສາລີ, ໝາກໂປມ ແລະ ໝາກງາ ເພາະອາຊິດແພນໂທທານິກ ຫຼື ວິຕາມິນບີ 5 ເປັນທາດອາຫານສໍາຄັນ ທີ່ຊ່ວຍຮັກສາເມັດສີພາຍໃນເສັ້ນຜົມ ເຮັດໃຫ້ຜົມດໍາ ແລະ ຊ່ວຍປ້ອງກັນຜົມຫງອກໄດ້ອີກ.

- ເມັດເຂົ້າ, ສາລີ, ເຂົ້າກ່ອງ, ໂຍເກີດ ແລະ ຜັກໃບຂຽວ ຈະມີທາດພາບາຫຼາຍ ເຊິ່ງແມ່ນສະມາຊິກຂອງກຸ່ມວິຕາມິນ B ລວມ ແລະ ວິຕາມິນທຽມລວມ ທີ່ສາມາດລະລາຍໃນນໍ້າໄດ້ ໂດຍມັກຖືກລວມເຂົ້າກັບກົດໂຟລິກ ທີ່ຊ່ວຍຟື້ນຟູສະພາບສີຜົມ ແລະ ຊ່ວຍບໍາລຸງໃຫ້ຊຸ່ມຊື່ນ.

**ຂໍ້ມູນຈາກ:**
**https://mgronline.com**



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❄ ***ກອງ**ປະຊຸມສະໄໝສາມັນ**ເທື່ອທີ 6** ຂອງສະພາແຫ່ງຊາດ **ຊຸດທີ IX** ພວມດໍາເນີນ ເປັນວາລະຂອງກົດໝາຍ **ສສຊ ຫຼາຍທ່ານ** ໄດ້ປະກອບຄໍາເຫັນ **ບັນຫາເດັ່ນໃນສັງຄົມ** ສ່ວງໃຫ້ເຫັນຫຼາຍດ້ານ **ການປະຕິບັດບ່ໍໃຊ້** ຄວາມເໝາະສົມຫຼາຍຢ່າງ ເພື່ອໃຫ້ປະຊາເອກອ້າງ ກົດໝາຍໃຊ້ຄູ່ຄຽງຕົນ **ນັ້ນນາ!***

❄ ***ສອງ**ສາມວັນຜ່ານມາ ຮູ້ສຶກໄດ້ວ່າ **ອາກາດມີການປ່ຽນແປງ** ອາດເປັນເພາະ **ລະດູໜາວເລີ່ມມາເຢືອນ** ເປັນສັນຍານ**ເຕືອນໃຫ້ຄົນໂສດຮູ້ວ່າ** ໜາວກາຍມີຜ້າຕຸ້ມ ບີງທົ່ມຮົ່ມກາຍາ ດີໃດ! ໜາວໃຈຄອບມອງຫາ ຄູ່ມາຄຽງຂ້າງ ຢ່າປ່ອຍກາຍແລະໃຈອ້າງ ລົມໜາວຊີ້ມຊູ່ **ຊອກຊູ້ມາຮ່ວມຊອນ** ນອນລ້າງປ່ຽນ TOTO **ທ່ານເອີຍ!***

## 🤗 ຊອບຍິ້ມ 🤗

*# ແອ່ບຕຸ້ງ*

### ເວົ້າບໍ່ມ່ອນ

ແມ່ຕູ້ສາ ພາຫຼານໄປທ່ຽວສວນສັດ ແລະ ໃນຂະນະທີ່ເບິ່ງລີງຢູ່ນັ້ນ ຫຼານກໍຮ້ອງຂຶ້ນວ່າ:

**ຫຼານ:** ປາດໂຖ ລີງຄືແມ່ຕູ້ແທ້

**ແມ່ຕູ້:** ຮຽນເຈົ້າສຸພາບແດ່ແມະ ເປັນເດັກນ້ອຍທັ້ນ

**ຫຼານ:** ແຮ່ງ ຫຼານຂໍໂທດ ໄດແຕ່ລີງບໍ່ເຂົ້າໃຈພາສາເນາະ ຄັນຊັ້ນມັນຄຽດໃຫ້ຫຼານແລ້ວ

**ແມ່ຕູ້:** ???



### ຄະຕິເຕືອນໃຈ

*#ດອກຫຍ້າ*

ໃຜຜູ້ມີຄວາມຮູ້ ຊິພູ່ງເຈົ້າອອດ ບໍ່ດີດາຍ
ໃຫ້ຍິ່ງແກ່ຍິ່ງກົ້ມ ສະເໜີເຂົ້າໃບນາ
ວັນລາຄາຕົນນັ້ນ ຕົນຕີບໍ່ທ່ອນຄ່ອງ ດອກນາ!
ປ່ອຍໃຫ້ພົງພີ່ນ້ອງ ຕີໃຫ້ລຶ້ງຄ່ອຍງາມ ເພີ່ນວ່າ

## ອາດ ກະວີລາວ

# ເວົ້າໃຫ້ຖືກກາລະເທສະ

**# ຕ.ສະຫວັນ**

❈ ຄົນເຮົາມີມາກລ້ອນ ຫຼາຍຫຼາກນິໄສ
ຈັກໃຜຄິດແນວໃດ ຊົ່ວດີຫຼືຮ້າຍ
ເຮົາບໍ່ແນມດູໄດ້ ເດົາໃຈຄົນອື່ນ
ຝືນຍິ້ມດີຕໍ່ໜ້າ ລັບຫຼັງປ້ອຍດ່າເຮົາ ກໍມີ

❈ ພໍ່ແມ່ສອນລູກເຕົ້າ ມາແຕ່ເດີມດາ
ບໍ່ຄວນພໍາພຶມຈາ ເມື່ອຍາມກິນເຂົ້າ
ເພາະວ່າອາຫານຫຍໍ້າ ຈະຟູມຟາຍເຮ່ຍ
ເສຍມາລະຍາດຍ້ອນ ຄົນເວົ້າກ່າວຫຍັນ

❈ ຍາມກິນ ໂຕພັດເວົ້າ ຝອຍຢູ່ເລີຍເລີຍ ບໍ່ດີໄດ
ຊິນເຄີຍເປັນນິໄສ ຄູ່ກາຍຕົນແລ້ວ
ບໍ່ວ່າກິນນໍາຫົວໜ້າ ຫຼືເວລາມີວຽກ
ນໍ້າລາຍໄຫຼປຽກເປື້ອນ ຝອຍເລື້ອຍບໍ່ເຊົາ

❈ ບ່ອນທີ່ເຂົາຈັດໃຫ້ ສະຖານທີ່ກອງປະຊຸມ
ຄືບໍ່ຫານວາຈາ ກ່າວຄໍາຂານເວົ້າ
ຍົກເຫດຜົນມາອ້າງ ເອກະສານຕ່າງໆ
ຍູທ່າງຝອຍໝົດມື້ ແນວນີ້ຈຶ່ງດີ ວ່າບໍ

❈ ຫາກໃຜເປັນແບບນີ້ ຄວນທີ່ພິຈາລະນາ
ຮຽນບໍ່ຫານວາຈາ ກ່າວເຕືອນຕິຕ້ອງ
ລອງມອງຄົນຄຽງຂ້າງ ກາຍເຮົາດູວ່າ
ມາລະຍາດຮຽບຮ້ອຍ ດີແທ້ສໍ່າໃດ ທ່ານເອີຍ






# ປະສິດທິພາບ-ປະສິດທິຜົນ

"ປະສິດທິພາບ" ແລະ "ປະສິດທິຜົນ" ເປັນສອງຄຳທີ່ມີສຽງ ແລະ ຄວາມໝາຍໃກ້ຄຽງ ແລະ ພົວພັນກັນ ເພາະມີສາມພະຍາງຕົ້ນອັນດຽວກັນ ແຕ່ກໍມີຄວາມໝາຍຕ່າງກັນ ດັ່ງນີ້:

"ປະສິດທິພາບ" ເປັນຄຳປະສົມຈາກຄຳເຄົ້າປາລີປະເພດຄຳນາມ ປະກອບດ້ວຍຄຳວ່າ *Pasiddhi* "ປະສິດທິ" ໝາຍເຖິງ "ຄວາມສຳເລັດ" ແລະ ຄຳວ່າ Bhāva "ພາວະ" ແລ້ວແປງສຽງເປັນຄຳລາວວ່າ "ພາບ` ໝາຍເຖິງ "ຄວາມມີ, ຄວາມເປັນ". ເມື່ອສອງຄຳນີ້ປະສົມເຂົ້າກັນແລ້ວ ກາຍເປັນ "ປະສິດທິພາບ" ກໍໝາຍເຖິງ "ພາວະທີ່ເຮັດໃຫ້ເກີດຜົນສຳເລັດ, ຄວາມສາມາດທີ່ເຮັດໃຫ້ເກີດຜົນຈາກການກະທຳ"

ເວລາໃຊ້ກັບບຸກຄົນ ໝາຍເຖິງ "ຄວາມສາມາດໃນການເຮັດວຽກໄດ້ດີ ວ່ອງໄວ ແລະສຳເລັດກົງເວລາ" ເຊັ່ນ

- ບຸກຄະລາກອນທີ່ມີປະສິດທິພາບ ຍ່ອມເຮັດໃຫ້ການຈັດຕັ້ງ ຫຼືໜ່ວຍງານພັດທະນາໄປໄດ້ຢ່າງວ່ອງໄວ.

ເວລາໃຊ້ກັບການຈັດຕັ້ງຫຼືໜ່ວຍງານ "ປະສິດທິພາບ" ໝາຍເຖິງ "ລະບົບການດຳເນີນງານທີ່ເຮັດໃຫ້ເກີດຄວາມສຳເລັດໄດ້ເປັນຢ່າງດີ" ເຊັ່ນ

- ການຈັດຕັ້ງທີ່ມີປະສິດທິພາບ ແມ່ນມີລະບຽບຂັ້ນຕອນໃນການເຮັດວຽກ ພະນັກງານມີຄວາມຮູ້ຄວາມສາມາດ ມີລະບອບການກວດກາ ແລະ ຜະລິດຜົນງານຄຸນນະພາບໄດ້ກົງກັບເວລາ.

ນອກຈາກຈະໃຊ້ກັບບຸກຄົນ ແລະ ການຈັດຕັ້ງແລ້ວ "ປະສິດທິພາບ" ຍັງໃຊ້ກັບສິ່ງຕ່າງໆ ທັງທີ່ເປັນຮູປະທຳ ແລະນາມະທຳ ໝາຍເຖິງ "ພາວະການດຳເນີນງານທີ່ໃຫ້ຜົນສຳເລັດເປັນທີ່ພໍໃຈຕາມຄວາມຕ້ອງການ" ເຊັ່ນ

- ຄອມພິວເຕີໜ່ວຍນີ້ມີປະສິດທິພາບດີ.
- ການສອນຂອງອາຈານທ່ານນີ້ມີປະສິດທິພາບຍອດຍິ່ງ.
- ປະສິດທິພາບຂອງການບໍລິຫານວຽກງານຢູ່ບໍລິສັດແຫ່ງນີ້ເປັນທີ່ໜ້າເຊື່ອຖື.

"ປະສິດທິຜົນ" ເປັນຄຳປະສົມຈາກຄຳເຄົ້າປາລີ ປະເພດຄຳນາມ ປະກອບດ້ວຍຄຳວ່າ Pasiddhi "ປະສິດທິ" ໝາຍເຖິງ "ຄວາມສຳເລັດ" ແລະ ຄຳວ່າ Phala "ຜະລະ" ແລ້ວແປງສຽງເປັນຄຳລາວວ່າ "ຜົນ" ໝາຍເຖິງ "ປະໂຫຍດທີ່ໄດ້, ສິ່ງທີ່ເກີດຂຶ້ນຈາກການກະທຳ". ເມື່ອສອງຄຳນີ້ປະສົມເຂົ້າກັນແລ້ວ ກາຍເປັນ "ປະສິດທິຜົນ ກໍໝາຍເຖິງ "ຜົນສຳເລັດ, ໝາກຜົນທີ່ເກີດຂຶ້ນ" ເຊັ່ນ

- ແຜນການທີ່ດີຕ້ອງສາມາດນຳມາປະຕິບັດໄດ້ໃນຊີວິດຕົວຈິງ ແລະ ໃຊ້ແລ້ວເກີດປະສິດທິຜົນ.
- ຢາທີ່ມີປະສິດທິຜົນ ໃຊ້ແລ້ວຕ້ອງເຮັດໃຫ້ຄົນເຈັບມີອາການດີຂຶ້ນ.
- ການທີ່ປະຊາຊົນປະຕິບັດກົດໝາຍຢ່າງເຂັ້ມງວດ ສະແດງໃຫ້ເຫັນເຖິງປະສິດທິຜົນຂອງການໂຄສະນາປະຊາສຳພັນຂອງພາກສ່ວນກ່ຽວຂ້ອງ.

ຄຳວ່າ "ປະສິດທິຜົນ" ມີຄວາມໝາຍຕ່າງຈາກ "ປະສິດທິພາບ" ເຖິງແມ່ນວ່າຈະເບິ່ງຄ້າຍຄືກັນ ແລະ ໃຊ້ໃນບໍລິບົດດຽວກັນໄດ້ ເຊັ່ນເວົ້າວ່າ ການບໍລິຫານງານທີ່ມີປະສິດທິພາບ ຫຼື ການບໍລິຫານງານທີ່ມີປະສິດທິຜົນ ກໍໄດ້, ແຕ່ຄວາມໝາຍຂອງທັງສອງວະລີນີ້ ພັດຕ່າງກັນຢູ່ບ່ອນວ່າ "ປະສິດທິພາບ" ເນັ້ນຂະບວນການທີ່ດີນຳໄປສູ່ຄວາມສຳເລັດ. ສ່ວນ "ປະສິດທິຜົນ" ເນັ້ນຄວາມສຳເລັດ ຫຼື ປະໂຫຍດທີ່ໄດ້.

**#ຂໍ້ສັງເກດ:** ຄຳທັງສອງນີ້ ສາມາດເກີດຢູ່ໃນປະໂຫຍກດຽວກັນໄດ້ ເຊິ່ງສາມາດຈຳແນກຄວາມໝາຍຂອງ "ປະສິດທິພາບ" ແລະ "ປະສິດທິຜົນ" ໄດ້ຢ່າງຊັດເຈນ ດັ່ງຕົວຢ່າງລຸ່ມນີ້:

- ຖ້າຢາກໃຫ້ວຽກງານມີປະສິດທິຜົນດີ ບໍລິສັດຕ້ອງມີພະນັກງານທີ່ມີປະສິດທິພາບສູງ.

ຖ້າພະນັກງານໃນບໍລິສັດມີປະສິດທິພາບສູງ, ປະສິດທິຜົນຂອງວຽກງານທີ່ອອກມາກໍຈະສູງໄປນຳ.

# ນາຍົກກຳປູເຈຍ ມີຄຳເຫັນຕໍ່ "3 ຂໍ້ລິເລີ່ມທົ່ວໂລກ" ຂອງຈີນ

ອີງຕາມການລາຍງານໃຫ້ຮູ້ວ່າ: ທ່ານ ຮຸນມາເນັດ ນາຍົກລັດຖະມົນຕີກຳປູເຈຍ ໄດ້ໃຫ້ສຳພາດຕໍ່ນັກຂ່າວວິທະຍຸໂທລະພາບສູນກາງຈີນ ຫຼື CMG ໃນຫວ່າງມໍ່ໆມານີ້ວ່າ: 3 ຂໍ້ລິເລີ່ມທົ່ວໂລກ ຄື: ຂໍ້ລິເລີ່ມວ່າດ້ວຍການພັດທະນາທົ່ວໂລກ, ຂໍ້ລິເລີ່ມວ່າດ້ວຍຄວາມໝັ້ນຄົງທົ່ວໂລກ ແລະ ຂໍ້ລິເລີ່ມວ່າດ້ວຍອະລິຍະທຳທົ່ວໂລກທີ່ສະເໜີອອກໂດຍທ່ານ ສີຈິ້ນຜິງ ປະທານປະເທດຈີນ ມີຜົນດີຕໍ່ການບັນລຸຄວາມກົມກຽວ ແລະ ຄວາມຈະເລີນຮຸ່ງເຮືອງຂອງໂລກ.



ໃນໂອກາດນີ້, ທ່ານຮຸນມາເນັດ ຢືນຢັນວ່າ: ກຳປູເຈຍເປັນໜຶ່ງໃນປະເທດທີ່ສະໜັບສະໜູນຂໍ້ລິເລີ່ມເຫຼົ່ານີ້ກ່ອນໝູ່. ສຳລັບຂໍ້ລິເລີ່ມວ່າດ້ວຍການພັດທະນາທົ່ວໂລກແລ້ວ, ແມ່ນໄດ້ເນັ້ນໜັກເຖິງເປົ້າໝາຍການພັດທະນາແບບກວມລວມ ໂດຍໄດ້ລົງເລິກເອົາໃຈໃສ່ການຫຼຸດຜ່ອນຄວາມທຸກຍາກ ແລະ ເພີ່ມພູນຄູນສ້າງຄວາມສຸກໃຫ້ກັບປະຊາຊົນ ໂດຍສະເພາະແມ່ນເອົາໃຈໃສ່ບັນຫາດັ່ງກ່າວໃນປະເທດພວມພັດທະນາ; ນອກນັ້ນ, ຂໍ້ລິເລີ່ມວ່າດ້ວຍການພັດທະນາທົ່ວໂລກຍັງໄດ້ເອົາໃຈໃສ່ການພັດທະນາແບບສີຂຽວ ເຊິ່ງມີຄວາມໝາຍສຳຄັນຍິ່ງໃນການຮັບມືກັບບັນຫາການປ່ຽນແປງຂອງດິນຟ້າອາກາດທີ່ພວກເຮົາພວມປະເຊີນຢູ່; ຂໍ້ລິເລີ່ມວ່າດ້ວຍຄວາມໝັ້ນຄົງທົ່ວໂລກ ໄດ້ເນັ້ນໜັກໃຫ້ນຳໃຊ້ວິທີທາງການທູດ ແລະ ລັດທິຫຼາຍຝ່າຍ ເພື່ອແກ້ໄຂບັນຫາໃນພາກພື້ນ ແລະ ສາກົນ ເຊັ່ນ: ການຮັບມືກັບການປະທະກັນເປັນຕົ້ນ, ລວມທັງບັນຫາແບບເກົ່າ ແລະ ແບບໃໝ່; ສ່ວນຂໍ້ລິເລີ່ມວ່າດ້ວຍອະລິຍະທຳທົ່ວໂລກໄດ້ເນັ້ນໜັກໃຫ້ເຄົາລົບທັດສະນະຂອງກັນ ແລະ ກັນ ກໍຄືເຄົາລົບອະລິຍະທຳຂອງປະເທດຕ່າງໆ. ພ້ອມດຽວກັນນີ້, ກໍສະໜັບສະໜູນການເຄົາລົບເຊິ່ງກັນ ແລະ ກັນ ບົນພື້ນຖານດັ່ງກ່າວ ແລະ ບໍ່ແຊກແຊງວຽກງານພາຍໃນຂອງກັນ ແລະກັນ.

ຈາກສະພາບການສາກົນທີ່ເກີດຂຶ້ນໃນຫວ່າງມໍ່ໆມານີ້ ໄດ້ເຮັດໃຫ້ຄົນທັງຫຼາຍຮັບຮູ້ວ່າ: ເກືອບວ່າທຸກໆປະເທດລ້ວນແຕ່ຢາກທີ່ຈະຫຼີກລ່ຽງບໍ່ໃຫ້ຖືກຜົນກະທົບຈາກເຫດການທົ່ວໂລກໄດ້ ເຊັ່ນ: ການແຜ່ລະບາດຂອງພະຍາດ ແລະ ສົງຄາມເປັນຕົ້ນ. ສິ່ງນີ້ໄດ້ສ່ອງແສງໃຫ້ເຫັນເຖິງຄວາມສຳຄັນຂອງການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ.

# ຫວຽດນາມ ບັນລຸລະດັບເຕີບໂຕເສດຖະກິດດີຈິຕອນໄວທີ່ສຸດໃນພາກພື້ນ



ມີການລາຍງານຂ່າວເມື່ອວັນທີ 10 ພະຈິກຜ່ານມາ, ຕາມບົດລາຍງານເສດຖະກິດດີຈິຕອນ ອາຊີຕາເວັນອອກສ່ຽງໃຕ້ (e-Conomy SEA report) 2023 ໂດຍ Google, Temasek ແລະ Bain & Company ປະກາດເມື່ອບໍ່ດົນຜ່ານມາ ໄດ້ອັບເດດທ່າອ່ຽງເສດຖະກິດດີຈິຕອນຂອງ 6 ປະເທດ, ລວມມີ: ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ.

ຕາມບົດລາຍງານ, ຫວຽດນາມ ສືບຕໍ່ແມ່ນປະເທດທີ່ມີລະດັບການເຕີບໂຕໄວທີ່ສຸດໃນພາກພື້ນເປັນເວລາ 2 ປີລຽນຕິດ (2022 ແລະ 2023) ແລະ ໄດ້ຮັບການຄາດຄະເນຈະສືບຕໍ່ຮັກສາທີ່ຕັ້ງດັ່ງກ່າວໃນປີ 2025. ລະອຽດແມ່ນ, ຫວຽດນາມ ມີລະດັບເຕີບໂຕຄວບຄູ່ 19% ແລະ ຄາດຄະເນວ່າຈະສືບຕໍ່ຮັກສາໂຕເລກນີ້ໃນປີ 2025. ຍອດມູນຄ່າສິນຄ້າຂອງຫວຽດນາມ ຄາດວ່າບັນລຸອັດຕາການເຕີບໂຕຄວບຄູ່ແຕ່ລະປີ (CAGR), ຈາກ 30 ຕື້ໂດລາ ໃນປີ 2023 ຂຶ້ນເປັນເກືອບ 45 ຕື້ໂດລາ ໃນປີ 2025. ຄາດວ່າ, ການເຕີບໂຕກ່ຽວກັບຍອດມູນຄ່າສິນຄ້າໃນ 2 ປີຈະມາເຖິງ ຈະໄດ້ຮັບຈາກຕະຫຼາດການຄ້າເອເລັກໂຕຣນິກ ແລະ ທ່ອງທ່ຽວອອນລາຍ.

ຫວຽດນາມ ກໍແມ່ນປະເທດທີ່ມີລະດັບການຊຳລະດີຈິຕອນບັນລຸລະດັບເຕີບໂຕໄວທີ່ສຸດຢູ່ອາຊີຕາເວັນອອກສ່ຽງໃຕ້ ໃນປີ 2023. ຄາດວ່າ, ຈະສືບຕໍ່ຮັກສາລະດັບເຕີບໂຕຄວບຄູ່ໃນແຕ່ລະປີ 13% ໃນໄລຍະ 2023-2025.

# ອິນເດຍ ຈະສ້າງຝົນທຽມ ຫຼຸດຜ່ອນມົນລະພິດທາງອາກາດ

ອີງຕາມການລາຍງານຂ່າວເມື່ອບໍ່ດົນມານີ້ ໃຫ້ຮູ້ວ່າ: ເປັນຄັ້ງທຳອິດທີ່ລັດຖະບານອິນເດຍ ວາງແຜນທີ່ຈະສ້າງຝົນທຽມເພື່ອພະຍາຍາມປັບປຸງຄຸນນະພາບອາກາດ ໃນນະຄອນຫຼວງນິວເດລີ ທີ່ເປັນມົນລະພິດຫຼາຍທີ່ສຸດໃນໂລກ ເຊິ່ງຖືກປົກຄຸມດ້ວຍໝອກຝຸ່ນຄວັນ.



ໃນສະພາບການທີ່ປະເຊີນກັບມົນລະພິດທາງອາກາດທີ່ຮ້າຍແຮງໃນປັດຈຸບັນ, ນະຄອນຫຼວງນິວເດລີ ປະເທດອິນເດຍ ໄດ້ສັ່ງໃຫ້ໂຮງຮຽນທຸກແຫ່ງປິດ, ຢຸດກິດຈະການກໍ່ສ້າງ ແລະ ປະກາດຈະກຳນົດການຈຳກັດພາຫະນະ.

ທ່ານ ໂກປາລ ໄຣ ຫົວໜ້າອົງການສິ່ງແວດລ້ອມ ນະຄອນຫຼວງນິວເດລີ ກ່າວວ່າ: ອຳນາດການປົກຄອງທ້ອງຖິ່ນຈະພະຍາຍາມເຮັດໃຫ້ເກີດຝົນທຽມໃນເດືອນພະຈິກນີ້ ເພື່ອພະຍາຍາມຕ້ານມົນລະພິດທາງອາກາດໃນເມືອງນີ້.

ດັດຊະນີຄຸນນະພາບອາກາດຂອງນິວເດລີ ຖືກບັນທຶກຢູ່ທີ່ 320 ໃນຕອນເຊົ້າຂອງວັນທີ 8 ພະຈິກຜ່ານມາ, ເປັນລະດັບທີ່ກຸ່ມບໍລິສັດ IQ Air (ບໍລິສັດທີ່ຊ່ຽວຊານໃນດ້ານເຕັກໂນໂລຊີຂອງຄຸນນະພາບອາກາດ) ປະເທດສະວິດ ຈັດຢູ່ໃນລະດັບອັນຕະລາຍ, ກ່ອນຈະຫຼຸດລົງເປັນ 294 ໃນພາຍຫຼັງ.

ໂດຍທົ່ວໄປແລ້ວ ຄຸນນະພາບຂອງອາກາດໃນນະຄອນນິວເດລີ ຈະຊຸດໂຊມລົງທຸກປີກ່ອນລະດູໜາວ, ເມື່ອອາກາດເຢັນຈະເກັບເອົາມົນລະພິດຈາກແຫຼ່ງຕ່າງໆ ເຊັ່ນ: ພາຫະນະ, ອຸດສາຫະກຳ, ຂີ້ຝຸ່ນໃນການກໍ່ສ້າງ ແລະ ການເຜົາໄໝ້ສິ່ງເສດເຫຼືອກະສິກຳ.




ຊີວິດຄູ່ທີ່ຍືນຍົງຕະຫຼອດການ ຄື ຜົວ ແລະ ເມຍທີ່ມີໃຈເປີດກວ້າງໃຫ້ກັນ ແລະ ກັນ ບໍ່ວ່າໜັກ ຫຼື ເບົາ ກໍຊ່ວຍກັນແບກຫາບບໍ່ເວົ້າໃຫ້ບາດໝາງໃຈກັນ.

